ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 091 /ບທວລ

ນະຄອນຫຼວງວຽງຈັນ, ວັນທີ 24 APR 2025

ຮຽນ : ທ່ານ ຜູ້ຖືຮຸ້ນຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
ເລື່ອງ : ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 18/3/2025.
- ອີງຕາມບັນຊີທະບຽນຜູ້ຖືຮຸ້ນຈາກສຳນັກງານຕະຫຼາດຫຼັກຊັບລາວ.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ບທວລ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໃນວັນທີ 29/4/2025 ເວລາ 09:00 ໂມງ,ເລີ່ມລົງທະບຽນເວລາ 8:30-09:00 ໂມງ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 4 ສຳນັກງານໃຫ່ຍ ຂອງ ບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ການຄ້າ ແລະບໍລິການ ຂາອອກ - ຂາເຂົ້າ (ພກອ) ບ້ານສີໄຄທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປລາວ ເພື່ອພິຈາລະນາ ແລະ ຮັບຮອງເອົາມະຕິຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດ ບທວລ ໄດ້ແຈ້ງໃຫ້ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 2/4/2025 ເປັນມື້ປິດປຶ້ມ ບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ສະນັ້ນ, ບໍລິສັດ ບທວລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກບໍລິສັດ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄດ້ເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານ ເຂົ້າໃນການເຂົ້າຮ່ວມ ກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະ ບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນ້ຍເຫຼ້ຍ

ໜັງສືເຊີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ

ວັນອັງຄານ**, ທີ 29 ເມສາ 2025**

ເວລາ 9:00 ໂມງ

ຢູ່ທີ່ ຫ້ອງປະຊຸມໃຫ່ຍ ຊັ້ນ 4

ບ້ານ ສີໄຄທົ່ງ, ເມືອງສີໂຄດຕະບອງ

ນະຄອນຫຼວງວຽງຈັນ, ສປປລາວ

ເອກະສານຄັດຕິດ :

1. ວາລະກອງປະຊຸມຜູ້ຖືຮຸ້ນ ບທວລ ປີ 2024
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023
3. ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
4. ບົດລາຍງານການເງິນ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
5. ການວ່າຈ້າງຜູ້ອຳນວຍການໃຫຍ່ແລະການປ່ຽນແປງສະມາຊິກສະພາບໍລິຫານຂອງ ບໍລິສັດ
6. ການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ
7. ການຂຶ້ນທະບຽນບັນດາບໍລິສັດລູກ
8. ແບບຟອມໃບມອບສິດ.
9. ແຜນທີ່ຕັ້ງຂອງກອງປະຊຸມສາມັນຜູ້ຖືຮຸ້ນ

ໝາຍເຫດ

1. ຜູ້ຖືຮຸ້ນທຸກໆທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆເລີ່ມແຕ່ວັນທີ 10/04/2025 ຢູ່ຕະຫຼາດຫຼັກຊັບ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ ບ້ານ ໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ໂທລະສັບ (856-21) 454361, ແຟັກ (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດວ້ຍຕົນເອງ ກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 11</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມກອງປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມ ກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນນີ້ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະ ແລະໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການ ຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບສົ່ງເຖິງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຊັ້ນ 1, ພະແນກເລຂານຸການ ບໍລິສັດ, ບ້ານ ໜອງບອນ, ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ສປປລາວ ແລະ ກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 29/04/2025.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ຄຳມີ (856-20) 55966610 ໃນໂມງລັດຖະການ.

ຄຳແນະນຳກ່ຽວກັບການລົງຄະແນນສຽງ

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ກຸ່ມ ບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງ ຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນ ຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ກຸ່ມບໍລິສັດ ທ່ອງ ທ່ຽວ ອັດທະນະທຳລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບ ເກັບເອົາ ແລະຮວບລວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ຮຸ້ນ ຂອງກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ ທັງໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ ໃນມາດຕາ 143 ຂອງກົດໝາຍວ່າ ດ້ວຍວິສາຫະກິດ.

ເອກະສານຄັດຕິດ 01 :

ວາລະຂອງກອງປະຊຸມ
ສາມັນຜູ້ຖືຮຸ້ນ ບຊລ ປະຈຳປີ 2024

- **ວາລະທີ 01** : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023

ລາຍລະອຽດ :

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໄດ້ຈັດຂຶ້ນໃນວັນທີ 30 ເມສາ 2024, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 02 ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ :

ບົດບັນທຶກກອງປະຊຸມມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາ ລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023, ວັນທີ 30 ເມສາ 2024.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະຮັບຮອງ ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ລາຍລະອຽດ :

ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 18/3/2025 ເຊິ່ງມີເນື້ອໃນລາຍລະອຽດ ໃນເອກະສານຄັດຕິດ 03.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນທຸລະກິດປະຈຳປີ 2024.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 03 :** ພິຈາລະນາ ແລະຮັບຮອງ ເອກະສານລາຍງານການເງິນປະຈຳປີ 2024

ລາຍລະອຽດ :

ເອກະສານລາຍງານການເງິນປະຈຳປີ 2024 ແມ່ນໄດ້ຜ່ານການກວດສອບຢ່າງຖືກຕ້ອງຈາກ ບໍລິສັດ ກວດສອບພາຍນອກ EY ມີ<u>ເອກະສານຄັດຕິດ 04</u> **,**ເຊິ່ງໄດ້ມີການລາຍງານຕໍ່ກອງປະຊຸມ ສະ ພາບໍລິຫານ ຄັ້ງວັນທີ 18/3/2025.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ເອກະສານລາຍງານການເງິນປະຈຳປີ 2024.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນ ສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 04 :** ພິຈາລະນາ ແລະຮັບຮອງ ການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການ ປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ

ລາຍລະອຽດ :

ການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ,ທີ່ໄດ້ລາຍງານຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 18/3/2025 ເຊິ່ງມີເນື້ອໃນລາຍລະອຽດ ໃນ <u>ເອກະສານຄັດຕິດ 05</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງ ບໍລິສັດ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນ ສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 05 :** ພິຈາລະນາ ແລະຮັບຮອງ ກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕ ແບກໂຄ ການຄ້າ ຈຳກັດ

ລາຍລະອຽດ :

ກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ມີທີ່ໄດ້ລາຍງານໃນກອງ ປະຊຸມສະພາບໍລິຫານ ໃນວັນທີ 18/3/2025 ເຊິ່ງມີເນື້ອໃນລາຍລະອຽດໃນ<u>ເອກະສານຄັດຕິດ 09</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 06 :** ພິຈາລະນາ ແລະຮັບຮອງ ການຂຶ້ນທະບຽນບັນດາບໍລິສັດລູກ

ລາຍລະອຽດ :

ຂຶ້ນທະບຽນບັນດາບໍລິສັດລູກທີ່ໄດ້ລາຍງານຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 18/3/2025 ເຊິ່ງມີເນື້ອໃນລາຍລະອຽດ ໃນ<u>ເອກະສານຄັດຕິດ 10</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະຮັບຮອງເອົາ ຂຶ້ນທະບຽນບັນດາບໍລິສັດລູກ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023
ຂອງ ບໍລິສັດ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ຕໍ່ກອງປະຊຸມ ເພື່ອໃຫ້ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.

ເນື່ອງຈາກວ່າ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ໄດ້ເປີດເຜີຍຜ່ານ ຊ່ອງທ່າງຕະຫຼາດຫຼັກຊັບລາວແລ້ວ ເນື້ອໃນລະອຽດຈະບໍ່ໄດ້ອ່ານຄືນໃນກອງປະຊຸມ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

ເອກະສານຕິດຄັດ 02 :
ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ
ນະຄອນຫຼວງວຽງຈັນ, ວັນທີ
29/04/2025

ເອກະສານຕິດຄັດ 02 : ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ຈຽງຈັນ, ສປປລາວ ຖ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VILLAGE VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 165 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 14 MAY 2024

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023
ບໍລິສັດ ຊີມັງລາວ ມະຫາຊົນ

ປະຊຸມເມື່ອວັນທີ 30/04/2024 ເວລາ 09:00 - 11:45 ໂມງ ທີ່ຫ້ອງປະຊຸມຊັ້ນ 04 ສຳນັກງານໃຫຍ່ຂອງລັດວິສາຫະກິດ ພກອ. ປະທານກອງປະຊຸມໂດຍທ່ານ ເນັຍ ເຫຼຍ ປະທານສະພາບໍລິຫານຂອງ ບໍລິສັດ ຊີມັງລາວ ມະຫາຊົນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມຕົວຈິງ 23 ທ່ານ, ໃນນັ້ນມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 11 ທ່ານ ແລະ ມອບສັນທະ 14 ທ່ານ, ມີຮຸ້ນລວມກັນທັງໝົດ 28.043.700 ຮຸ້ນ ເທົ່າກັບ 70% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບຂອງບໍລິສັດ.

I. ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະ ແນະນຳຜູ້ເຂົ້າຮ່ວມປະຊຸມ ດັ່ງນີ້ :

1. ທ່ານ ເນັຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC;
2. ທ່ານ ວັນທອງ ສີດທິກຸນ ຜູ້ອຳນວຍການໃຫ່ຍຂອງ ລັດວິສາຫະກິດ ພກອ ທັງເປັນຮອງປະທານສະພາບໍລິຫານຂອງ ບໍລິສັດ LCC;
3. ທ່ານ ຈ່າງ ຈຶ່ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນຂອງ ບໍລິສັດ LCC;
4. ທ່ານ ໄພວັນ ແສງພະຈັນ ຮອງຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ;
5. ທ່ານ ອັດສະວິນ ຂັນທະວົງ ວິຊາການ ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ ຕລຊລ;
6. ທ່ານ ສົມທະນຸ ສົມພອງບຸດຕະຂັນ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ.

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ແຕ່ລະວາລະຢ່າງເປັນທາງການ ເຊິ່ງກອງປະຊຸມຄັ້ງນີ້ ມີທັງໝົດ 09 ວາລະທີ່ຕ້ອງໄດ້ພິຈາລະນາ, ມີຄຳເຫັນ ແລະລົງຄະແນນສຽງ ດັ່ງນີ້ :

ວາລະທີ 01 : ພິຈາລະນາ ແລະຮັບຮອງ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2022.

ທ່ານ ເນັຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານ ບົດບັນທຶກຂອງກອງປະຊຸມສາມັນຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2022 ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 01.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ເຊິ່ງມີຄຳເຫັນ ແລະ ຄຳຖາມ ດັ່ງນີ້ :

- ທ່ານ ໄກວັນ ກາດາວານີ Mr Kraiwal Kadavanich ຕາງໜ້າສະມາຄົມຜູ້ຖືຮຸ້ນໄທ ໄດ້ປະກອບຄຳເຫັນວ່າ: ເດືອນ ມັງກອນ ປີ 2023 ທາງບໍລິສັດໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ແຕ່ວ່າບໍ່ໄດ້ເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ ມາຮັບຮອງຜ່ານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໃນຄັ້ງນີ້, ນອກຈາກນັ້ນ, ສະນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວນັ້ນ, ສະເໜີໃຫ້ສາຍບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວຢູ່ໜ້າຈໍເລີຍ ເພື່ອໃຫ້ບັນດາຜູ້ຖືຮຸ້ນພິຈາລະນາ ແລະ ປະກອບຄຳເຫັນຕໍ່ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ.

- ທ່ານ ຈັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ເຫັນດີຕາມຄຳສະເໜີຂອງ ທ່ານ ໄກວັນ ກາດາວານີ ແລະ ໄດ້ມອບໃຫ້ພະນັກງານສາຍບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວຢູ່ໜ້າຈໍ.

ຜ່ານການພິຈາລະນາ ແລະການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະຮັບຮອງບົດລາຍງານວຽກງານການດຳເນີນທຸລະກິດຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2023

ທ່ານ ເນັຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານ ບົດລາຍງານວຽກງານການດຳເນີນທຸລະກິດຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2023 ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 02.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03: ພິຈາລະນາ ແລະຮັບຮອງບົດລາຍງານສະພາບການເງິນຂອງ ບໍລິສັດ ຊີມັ້ງ ລາວ ມະຫາຊົນ ປະຈຳປີ 2023.

ທ່ານ ຈ່າງ ຈີງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນຂອງ ບໍລິສັດ LCC ໄດ້ລາຍ ບົດລາຍງານສະພາບການເງິນຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ ປະຈຳປີ 2023 ຕໍ່ກອງປະຊຸມ ເຊິ່ງ ມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 03. ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04 : ພິຈາລະນາ ແລະຮັບຮອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດຣີສອດສາກົນໜອງສີຟ້າດວງຈັນ ວັງວຽງ (ສຸນຝຶກອົບຮົມວັງວຽງ ກະຊວງປ້ອງກັນ ປະເທດ)

ທ່ານ ເນັຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍ ງານ ເນື້ອໃນຂອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດຣີສອດສາກົນໜອງສີຟ້າດວງຈັນ ວັງ ວຽງ (ສຸນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ) ໂດຍຫຍໍ້ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ ໃນເອກະສານຄັດຕິດ 04.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳ ເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05: ພິຈາລະນາ ແລະຮັບຮອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດ ສາທິດເສດຖະກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ

ທ່ານ ເນັຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍ ງານ ເນື້ອໃນຂອງສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດສາທິດເສດຖະກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ ໂດຍຫຍໍ້ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານ ຄັດຕິດ 05.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳ ເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :
- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06 : ພິຈາລະນາ ແລະຮັບຮອງກິດລະບຽບຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ທ່ານ ເນັຍເຫຼີຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານເນື້ອໃນຂອງກິດລະບຽບຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໂດຍຫຍໍ້ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 06.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :
- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07 : ພິຈາລະນາ ແລະຮັບຮອງກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ

ທ່ານ ເນັຍເຫຼີຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 07.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :
- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 08: ພິຈາລະນາ ແລະຮັບຮອງກ່ຽວກັບການຊື້ຮຸ້ນຂອງສຸນຜະລິດຮຸບເງົາ-ໂທລະພາບລາວ

ທ່ານ ເນັຍເຫຼີຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານກ່ຽວກັບການຊື້ຮຸ້ນຂອງສຸນຜະລິດຮຸບເງົາ-ໂທລະພາບລາວ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 08.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 09: ພິຈາລະນາ ແລະຮັບຮອງກ່ຽວກັບການປ່ຽນແປງຂອງຜູ້ບໍລິຫານຂັ້ນສູງ

ທ່ານ ເນັຍເຫຼີຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCC ໄດ້ລາຍງານກ່ຽວກັບການປ່ຽນແປງຂອງຜູ້ບໍລິຫານຂັ້ນສູງ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 09.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 28.043.700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຈາກນັ້ນ, ທ່ານ ສິນທະນຸ ສົມຟອງບຸດຕະຂັນ ຜູ້ຄວບຄຸມຄະແນນສຽງ ໄດ້ນັບກວດຜົນການລົງຄະແນນສຽງ ແລະ ແຈ້ງຜົນການລົງຄະແນນສຽງຂອງແຕ່ລະວາລະຕໍ່ກອງປະຊຸມ.

ສຸດທ້າຍ, ປະທານກອງປະຊຸມໄດ້ປະກາດວ່າ ວາລະທັງໝົດມີ 09 ຂໍ້ໃນກອງປະຊຸມຄັ້ງນີ້ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ, ພ້ອມກັນນັ້ນ, ໄດ້ກ່າວປິດກອງປະຊຸມໃນເວລາ 11:45 ໂມງຂອງວັນດຽວກັນ.

ປະທານກອງປະຊຸມ **ຜູ້ຂັນທີກ**

ເນັຍເຫຼີຍ

ເອກະສານຄັດຕິດ 03 :

ບົດດຳເນີນທຸລະກິດ ປະຈຳປີ 2024
ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີ ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຕໍ່ກອງປະຊຸມ ເພື່ອໃຫ້ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ເຊິ່ງມີເນື້ອໃນຄືດັ່ງນີ້:

I. ສະພາບການດຳເນີນທຸລະກິດ ປະຈຳປີ 2024

1. ໂຄງການກໍ່ສ້າງອາຄານທ່ອງທ່ຽວ ແລະ ວັດທະນະທຳ

ອາຄານທ່ອງທ່ຽວ ແລະ ວັດທະນະທຳ ເປັນຕຶກທີ່ໄດ້ກວມເອົາໂຮງແຮມ, ຄອນໂດ ແລະ ຫ້ອງການຢູ່ຕຶກດຽວກັນ ແລະ ເປັນສຳນັກງານໃຫຍ່ສຳລັບບໍລິສັດ, ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂພນະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໄດ້ຈັດພິທີວາງສີລາລຶກໃນວັນທີ 25/04/2023 ແລະ ເລີ່ມກໍ່ສ້າງຮາກຖານແຕ່ເດືອນ 5 ມາຮອດປັດຈຸບັນນີ້ ໄດ້ສຳເລັດການກໍ່ສ້າງຮາກຖານໂຄງລ່າງຮອດ 14 ຊັ້ນ, ຄາດວ່າຈະສຳເລັດການກໍ່ສ້າງໂຄງສ້າງຕຶກກ່ອນເດືອນ ສິງຫາ 2025 ແລະ ການຕົບແຕ່ງພາຍໃນຂອງຊັ້ນ 3 ເຊິ່ງຈະເປັນຫ້ອງການຂອງບໍລິສັດກ່ອນເດືອນ ຕຸລາ 2025.

2. ໂຄງການກໍ່ສ້າງເຂດສາທິດເສດຖະກິດອຸດສາຫະກຳ ການທ່ອງທ່ຽວ ວັດທະນະທຳ ວັງວຽງ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານຂັນໝາກ, ເມືອງວັງວຽງ, ແຂວງວຽງຈັນ ກວມເອົາເຂດພື້ນທີ່ໂຮງງານຊີມັງວັງວຽງ ຫຼັງ 1 ແລະ ຫຼັງ 2, ໄດ້ຈັດພິທີວາງສີລາລຶກໃນວັນທີ 12/01/2024 ສ່ວນແຜນການລວມ ແລະ ບົດວິພາກຂອງໂຄງການແຫ່ງນີ້ໄດ້ສຳເລັດແລ້ວ, ປັດຈຸບັນນີ້, ກຳລັງດຳເນີນວຽກງານກ່ຽວກັບການເຮັດບົດປະເມີນຜົນກະທົບສິ່ງແວດລ້ອມ.

3. ໂຄງການກໍ່ສ້າງເຂດຣິສອດສາກົນ ໜອງສີຟ້າດວງຈັນ ວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ)

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂພນຊ, ເມືອງວັງວຽງ, ແຂວງວຽງຈັນ, ກວມເນື້ອທີ່ປະມານ 24 ເຮັກຕາ ແລະ ໄດ້ຈັດພິທີວາງສີລາລຶກໃນວັນທີ 12/01/2024 ຄືກັນ, ກຳລັງກະກຽມວຽກການກໍ່ສ້າງເບື້ອງຕົ້ນ ເຊັ່ນ : ລະບົບໄຟຟ້າ, ລະບົບນ້ຳ ແລະ ສ້ອມແປງເສັ້ນທາງຕ່າງໆ.

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂນນຂີ້ເຫຼັກ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ເປັນກຸ່ມສິ່ງປຸກສ້າງທີ່ໄດ້ກວເອົາການຄ້າ, ທີ່ພັກ, ໂຮງແຮມ ແລະ ຫ້ອງການຢູ່ເຂດດຽວກັນ, ໄດ້ຈັດພິທີວາງສີລາລຶກໃນວັນທີ 04/04/2024, ໂຄງການນີ້ຈະແບ່ງວຽກງານການກໍ່ສ້າງເປັນໄລຍະ ເຊິ່ງເນື້ອທີ່ການກໍ່ສ້າງຂອງໄລຍະກໍ່ສ້າງທີ 1 ໄດ້ສຳເລັດແລ້ວປະມານ 3000 ຕາແມັດ.

5. ໂຄງການກໍ່ສ້າງຕຶກຫ້ພັກຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂນນສະຫວ່າງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ກວມເນື້ອທີ່ 2000 ຕາແມັດ ເປັນຕຶກ 3 ຊັ້ນ ມີຫ້ອງນອນທັງໝົດ 14 ຫ້ອງ, ໄດ້ສຳເລັດການກໍ່ສ້າງໂຄງສ້າງຕຶກແລ້ວ.

6. ໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບິອ ວັງວຽງ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ຈອມພູຜາບິອ ບ້ານນາຄຸນ, ເມືອງວັງວຽງ, ແຂວງວຽງຈັນ ຫ່າງຈາກເຂດ ສາທິດເສດຖະກິດອຸດສາຫະກຳ ການທ່ອງທ່ຽວ ວັດທະນະທຳ ວັງວຽງ ປະມານ 12 ກິໂລແມັດ, ແຜນ ການອອກແບບຈິດສຳນຶກສຳລັບໂຄງການດັ່ງກ່າວໄດ້ສຳເລັດແລ້ວ, ປັດຈຸບັນນີ້, ກຳລັງດຳເນີນວຽກງານ ກ່ຽວກັບການສຳຫຼວດ, ມີແຜນຈະເລີ່ມເຮັດການກໍ່ສ້າງໃນເດືອນ ພຶດສະພາ 2025.

7. ໂຄງການກໍ່ສ້າງອາຄານຮູບເງົາ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານເກົ້າຍອດ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ມີເນື້ອທີ່ທັງ ໝົດ 3050 ຕາແມັດ ເປັນໂຄງການພັດທະນາທີ່ດິນທີ່ຈະຮ່ວມມືກັບກົມຮູບເງົາ ກະຊວງຖະແຫຼງຂ່າວ ວັດ ທະນະທຳ ແລະ ທ່ອງທ່ຽວ, ໄດ້ສຳເລັດສ້າງແຜນການອອກແບບ ແລະ ສັນຍາການຮ່ວມມືພ້ອມຍື່ນໃຫ້ ພາກສ່ວນທີ່ກ່ຽວຂ້ອງເພື່ອພິຈາລະນາ ຫຼັງຈາກຮັບຮອງ ແລະ ເຊັນສັນຍາເປັນທາງການແລ້ວ ຈະເລີ່ມເຮັດ ການກໍ່ສ້າງປີນີ້.

8. ໂຄງການພັດທະນາທີ່ດິນທີ່ຮ່ວມມືກັບສູນກາງແມ່ລາວສ້າງຊາດ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ເປັນໂຄງການ ພັດທະນາທີ່ດິນທີ່ຈະຮ່ວມມືກັບສູນກາງແມ່ລາວສ້າງຊາດ, ໄດ້ສຳເລັດສ້າງແຜນການອອກພ້ອມຍື່ນໃຫ້ ພາກສ່ວນກ່ຽວຂ້ອງເພື່ອພິຈາລະນາ ຫຼັງຈາກຮັບຮອງແລ້ວຈະຮ່າງສັນຍາຮ່ວມມືສຳລັບໂຄງການພັດທະນາ ທີ່ດິນນີ້.

ນອກຈາກນີ້, ບໍລິສັດໄດ້ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືກັບກົມຊົ້ນຄົນ ແລະ ການຈັດຕັ້ງ ສັງຄົມ ສູນກາງແມ່ລາວສ້າງຊາດໃນວັນທີ 11/03/2025, ຜ່ານການປຶກສາຫາລືເປັນຫຼາຍຄັ້ງ ວຽກງານ ກ່ຽວກັບການຟື້ນຟູທາງເດີນເຮືອການຂົນສົ່ງຜູ້ໂດຍສານສາກົນຕາມແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ,ການຮ່ວມ ມືສ້າງຕັ້ງມູນນິທິ ວັດທະນະທຳພຸດທະສາສະໜາ ລາວ-ຈີນ ແລະ ວຽກງານອື່ນໆດ້ານຂົງເຂດການ ທ່ອງ ທ່ຽວ ໄດ້ຄ່ອຍໆດຳເນີນໄປເປັນລຳດັບ.

9. ວຽກງານດ້ານບໍ່ແຮ່

ວັນທີ 3/06/2024 ທາງບໍລິສັດໄດ້ເຊັນສັນຍາການຮ່ວມມືພັດທະນາດ້ານຂົງເຂດບໍ່ແຮ່ຢູ່ແຂວງຫົວ ພັນ ກັບບໍລິສັດ ລັດພັດທະນາຊົນນະບົດ ກະຊວງປ້ອງກັນປະເທດ, ຫຼັງຈາກນັ້ນ, ໄດ້ຍື່ນເອກະສານສະເໜີ ຂໍນຳລັດຖະບານຕາມຂັ້ນຕອນ, ຮອດປັດຈຸບັນນີ້, ໄດ້ຮັບທິດຊີ້ນຳຈາກຫ້ອງວ່າການສຳນັກງານນາຍົກ ລັດ ຖະມົນຕີແລ້ວ, ກຳລັງລໍຖ້າກະຊວງແຜນການ ແລະ ການລົງທຶນ ຮຽກຈັດກອງປະຊຸມເພື່ອເຈລະຈາສັນຍາ ສຳປະທານຕາມຂັ້ນຕອນ.

ນອກຈາກນີ້, ທັງສອງຝ່າຍເຫັນດີຈະຮ່ວມກັນພັດທະນາທີ່ດິນຂອງບໍລິສັດ ລັດພັດທະນາຊົນນະບົດ ເພື່ອປຸກຕຶກໃໝ່ ສ່ວນແຜນການອອກແບບຂອງໂຄງການ ແລະ ວຽກການສຳຫຼວດໄດ້ສຳເລັດແລ້ວ ຈະ ເລີ່ມເຮັດການກໍ່ສ້າງປີນີ້.

10. ການຊື້ຮຸ້ນຂອງສູນຜະລິດຮູບເງົາ ແລະ ລາຍການໂທລະພາບ ຈຳກັດ

ຜ່ານການເຈລະຈະກັນກັບຄູ່ຮ່ວມມືເປັນຫຼາຍຄັ້ງ ໄດ້ເຊັນສັນຍາຊື້ຮຸ້ນ ແລະ ກາຍເປັນຂາຮຸ້ນທີ່ຖືຮຸ້ນ 50% ຂອງສູນຜະລິດຮູບເງົາ ແລະ ລາຍການໂທລະພາບ ຈຳກັດ ຢ່າງເປັນທາງການໃນວັນທີ 06/12/ 2024 ເຊິ່ງປີນີ້ມີແຜນວຽກກ່ຽວກັບການຖ່າຍທຳຮູບເງົາ, ການຈັດເວທີປຶກສາຫາລື, ງານວາງສະແດງ, ມະ

ຫາກຳຮູບເງົາ, ມະຫາກຳດົນຕີ ແລະ ກິດຈະກຳອື່ນໆຫຼາກຫຼາຍຢ່າງ.

11. ການໂອນຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ຜ່ານການເຈລະຈະກັບຄູ່ຮ່ວມມືເປັນຫຼາຍຄັ້ງ ໄດ້ເຊັນສັນຍາການໂອນຮຸ້ນ ແລະ ການເປັນຂາຮຸ້ນທີ່ຖືຮຸ້ນ 20% ຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ໃນວັນທີ 16/12/2024 ແລະ ໄດ້ປ່ຽນນິຕິບຸກຄົນຂອງບໍລິສັດດັ່ງກ່າວເປັນທ່ານ ຕິ່ງ ຢູ້ຕິ່ງ, ປີນີ້ຈະເລີ່ມດຳເນີນກິດຈະການກ່ຽວກັບການຈຳໜ່າຍຢາສູບຕາມລະບຽບການທີ່ກ່ຽວຂ້ອງ.

12. ການສະເໜີສ້າງຕັ້ງ ບໍລິສັດ ບໍລິຫານກອງທຶນເພື່ອພັດທະນາແຫ່ງຊາດລາວ ຈຳກັດ

ໂຄງການນີ້ຈະຮ່ວມມືກັບບໍລິສັດບໍລິຫານກອງທຶນຈາກປະເທດຈີນ ທາງບໍລິສັດໄດ້ກຽມເອກະສານສະເໜີສ້າງຕັ້ງ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ພ້ອມຍື່ນໃຫ້ ສຄຄຊ ເພື່ອພິຈາລະນາໃນປີ 2024, ຫຼັງຈາກນັ້ນ, ໄດ້ຈັດພິທີເຊັນສັນຍາຮ່ວມມືສ້າງຕັ້ງບໍລິສັດ ບໍລິຫານກອງທຶນ ລະຫວ່າງ ກຸ່ມບໍລິສັດ ແລະ ບໍລິສັດ ສ້ຍມຸ່ຮ້ຍລີ້ ຄຸ້ມຄອງກອງທຶນ (ປັກກິ່ງ) ຈຳກັດ ໃນວັນທີ 17 ມີນາ 2025 ໂດຍມີ ສຄຄຊ ເຂົ້າຮ່ວມເປັນສັກຂີພິຍານ, ປັດຈຸບັນນີ້, ກຳລັງລໍຖ້າຄຳແຈ້ງຕອບຈາກ ສຄຄຊ.

13. ການສະເໜີສ້າງຕັ້ງ ບໍລິສັດ ພັດທະນາຊັບພະຍາກອນສີຂຽວ ຈຳກັດ

ໂຄງການນີ້ຈະຮ່ວມມືກັບບໍລິສັດ ລັດພັດທະນາຊົນນະບົດ ກະຊວງປ້ອງກັນປະເທດ, ທາງບໍລິສັດໄດ້ກຽມເອກະສານສະເໜີສ້າງຕັ້ງ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ພ້ອມຍື່ນໃຫ້ກະຊວງປ້ອງກັນປະເທດໃນປີ 2024, ຫຼັງຈາກນັ້ນ, ໄດ້ຈັດກອງປະຊຸມປຶກສາຫາລືເປັນ 2 ຄັ້ງແລ້ວ, ປັດຈຸບັນນີ້, ກຳລັງລໍຖ້າກົມເສດຖະກິດຮຽກຈັດກອງປະຊຸມເພື່ອເຈລະຈາຕື່ມອີກ.

14. ການຮ່ວມມືຢ່າງຮອບດ້ານກັບກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

ປີ 2024 ໄດ້ສະເໜີນຳກະຊວງ ຖວທ ເພື່ອໃຫ້ບໍລິສັດລູກ ຄື: ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ມີສ່ວນຮ່ວມໃນວຽກການວາງແຜນ, ອອກແບບ, ໂຄສະນາ, ກໍ່ສ້າງ, ດຳເນີນງານຕໍ່ແຫຼ່ງທ່ອງທ່ຽວຕ່າງໆທີ່ຈົດທະບຽນໃນບັນຊີຂອງກະຊວງ ຖວທ, ຮ່ວມມືກັນກັບພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ຖວທ ສ້າງແຫຼ່ງທ່ອງທ່ຽວຕ່າງໆໃຫ້ກາຍເປັນແຫຼ່ງທ່ອງທ່ຽວທັນສະໄໝທີ່ມີສິ່ງອຳນວຍຄວາມສະດວກຄົບຖ້ວນ, ສົມບຸນ, ໄດ້ມາດຖະຖານ, ມີຄວາມປອດໄພ ແລະ ມີຄວາມເໝາະສົມໃນການທ່ອງທ່ຽວ, ເຊິ່ງການສະເໜີດັ່ງກ່າວໄດ້ຮັບການເຫັນດີເປັນພື້ນຖານແລ້ວ, ທາງ ບໍລິສັດກໍໄດ້ກຽມແຜນວຽກ, ງົບປະມານ ແລະ ບຸກຄະລາກອນລະອຽດພ້ອມແລ້ວ ເພື່ອເຂົ້າຮ່ວມກອງປະຊຸມປຶກສາຫາລືທີ່ຈັດໂດຍພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ຖວທ.

15. ການສະເໜີສ້າງຕັ້ງ ມູນນິທິ ວັດທະນະທຳພຸດທະສາສະໜາ ລາວ-ຈີນ

ຜ່ານການເຈລະຈະກັບກົມຊົ້ນຄົນ ແລະ ການຈັດຕັ້ງສັງຄົມ ສູນກາງແນວລາວສ້າງຊາດເປັນຫຼາຍຄັ້ງ ເຫັນດີຮ່ວມກັນສ້າງຕັ້ງ ມູນນິທິ ວັດທະນະທຳພຸດທະສາສະໜາ ລາວ-ຈີນ ເຊິ່ງຈະເປັນຊ່ອງທາງລະດົມທຶນຮອນສະເພາະການກໍ່ສ້າງພະພຸດທະຮູບພູຜາບ໋ວອ້ງວຽງ ເພື່ອເຮັດໃຫ້ປາຖະໜາການກໍ່ສ້າງພະພຸດທະຮູບສີອະລີ, ສົ່ງເສີມວັດທະນະທຳພຸດທະສາສະໜາ ແລະ ຊຸກຍູ້ເສດຖະກິດ-ສັງຄົມມີການພັດທະນາຢ່າງຮອບດ້ານປະກົດຜົນເປັນຈິງ.

16. ການສະເໜີສ້າງຕັ້ງ ສອນພິກສາສາດແຫ່ງຊາດລາວ

ວັນທີ 25 ເມສາ 2023 ບໍລິສັດໄດ້ເຊັນສັນຍາຮ່ວມມືຍຸດທະສາດກັບສອນພິກສາສາດເຂດຮ້ອນສີບ

ສອງພັນນາ ສະຖາບັນວິທະຍາສາດ ສປ ຈີນ, ຜ່ານການປຶກສາຫາລື ທັງສອງຝ່າຍວາງແຜນຈະສ້າງຕັ້ງ ສວນ ພຶກສາສາດແຫ່ງຊາດລາວຢູ່ເທິງພູຫຼັງໂຮງງານຊີມັງວັງວຽງຫຼັງທີ 1 ກັບ ຫຼັງທີ 2, ພ້ອມຕັ້ງສູນປົກປັກຮັກສາ ຊີວະນາໆພັນໃນສວນດັ່ງກ່າວ, ແນວຄວາມຄິດກ່ຽວກັບໂຄງການດັ່ງກ່າວໄດ້ລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ແລ້ວ, ປັດຈຸບັນນີ້, ກຳລັງຮ່ວມກັນວາງແຜນ ແລະ ອອກແບບຕື່ມອີກຕໍ່ໂຄງການນີ້.

II. ສະພາບການສະສ້າງຊັບສົມບັດຂອງໂຮງງານຊີມັງວັງວຽງ ຫຼັງທີ 2

ວັນທີ 05 ມີນາ 2025 ຜູ້ອຳນວຍການພ້ອມດ້ວຍຄະນະຂອງກຸ່ມບໍລິສັດໄດ້ລົງກວດກາສະພາບການ ສະສ້າງຊັບສົມບັດຂອງໂຮງງານຊີມັງວັງວຽງ ຫຼັງທີ 2, ມາຮອດປັດຈຸບັນນີ້ ການມ້າງຮື້ຖອນເຄື່ອງຈັກອຸປະ ກອນເກົ່າແກ່ຢູ່ໃນໂຮງງານ ໄດ້ປະມານ 94%.

ເນື່ອງຈາກວ່າໄດ້ຈັດແບ່ງເປັນເຂດຢ່າງຊັດເຈນ ພ້ອມແຕ່ງຕັ້ງພະນັກງານປະຈຳພາກສະໜາມ ຈຶ່ງໄດ້ ຮັບປະກັນຄວາມປອດໄພ ແລະ ອຳນວຍຄວາມສະດວກໃນວຽກການມ້າງຮື້ຖອນ, ແຕ່ຍ້ອນຈຸດທີ່ຮື້ຖອນ ເຄື່ອງຈັກເປັນອາຄານຫຼາຍຊັ້ນ ບໍ່ສາມາດເອົາວິຊາການຕັດມ້າງຫຼາຍຄົນພ້ອມກັນໄດ້ ເພາະຢ້ານເກີດອຸບັດຕິ ເຫດປອດໄພ, ນອກຈາກນີ້, ເຄື່ອງຈັກຕ່າງໆ ສ່ວນຫລາຍເປັນປະເພດເຫຼັກແຂງ, ເຫຼັກທົນຄວາມຮ້ອນ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການໃຊ້ຕັດ, ສະນັ້ນ, ມີຄວາມຫຍຸ້ງຍາກຫຼາກຫຼາຍຢ່າງໃນທຸກຂັ້ນຕອນການ ຮື້ຖອນ, ຕັດ ແລະ ເຄື່ອນຍ້າຍ, ບໍ່ພຽງແຕ່ຕ້ອງຮັບປະກັນຄວາມປອດໄພ, ຍັງຕ້ອງໃຊ້ຄວາມລະມັດລະວັງ ເພື່ອບໍ່ໃຫ້ມີຜົນກະທົບເຖິງໂຄງສ້າງພື້ນຖານ ເພາະວ່າບໍລິສັດຕ້ອງການຮັກສາໂຄງສ້າງຕົກອາຄານຕ່າງໆໄວ້.

ມາຮອດປັດຈຸບັນ ການມ້າງຮື້ຖອນເຄື່ອງຈັກໃນໂຮງງານໄດ້ຈຳນວນ 1.922,38 ໂຕນ, ລາຍຮັບ ຈາກການສະສ້າງຊັບສົມບັດຈຳນວນ 11.610.061.400 ກີບ, ໃນນັ້ນ, ຈຳນວນ 4.211.612.391 ກີບ ໄດ້ນຳໃຊ້ເພື່ອເບີກຈ່າຍເງິນອຸດໜູນອອກການໃຫ້ແກ່ພະນັກງານ, ສ່ວນເງິນອຸດໜູນອອກການຍັງເຫຼືອຈຳ ນວນ 3.999.356.044 ກີບ ຈະຊຳລະໝົດກ່ອນວັນທີ 30 ມິຖຸນາ 2025.

III. ແຜນວຽກງານປະຈຳປີ 2025

ນອກຈາກຈະສືບຕໍ່ດຳເນີນໂຄງການທີ່ສະຫຼຸບຂ້າງເທິງໃຫ້ປະສົບຜົນສຳເລັດຕາມແຜນທີ່ວາງໄວ້, ພ້ອມກັນນັ້ນ, ທາງບໍລິສັດຈະຕັ້ງໜ້າກະກຽມຟື້ນຟູການຊື້ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບຄືນໃໝ່.

IV. ສະພາບການເປີດກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ

ຮອດວັນທີ 31/12/2024 ບໍລິສັດໄດ້ຈັດກອງປະຊຸມຜູ້ຖືຮຸ້ນ 1 ຄັ້ງ ແລະ ກອງປະຊຸມສະພາບໍລິ ຫານ 4 ຄັ້ງ, ໄດ້ພິຈາລະນາ ແລະ ຮັບຮອງ ຂໍ້ສະເໜີພິຈາລະນາສຳຄັນຕ່າງໆຄືດັ່ງນີ້:

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງ ບໍລິສັດ ; ວາລະກອງປະຊຸມສາມັນຜູ້ຖື ຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ; ບົດລາຍງານສະພາບການດຳເນີນທຸລະກິດ ປະຈຳປີ 2023 ຂອງ ບໍລິສັດ ; ບົດລາຍງານການເງິນ ປະຈຳປີ 2023 ຂອງບໍລິສັດ ; ສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດອິສອດສາກົນ ໜອງສີຟ້າດວງຈັນວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ); ກົດ ລະບຽບ ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ; ການຂຶ້ນທະບຽນບັນດາບໍລິສັດລູກ;

ການປ່ຽນແປງຂອງຜູ້ບໍລິຫານຂັ້ນສູງ; ການກູ້ຢືມເງິນຈາກທະນາຄານ; ການດັດແກ້ເນື້ອໃນໃບທະບຽນວິສາຫະກິດ ຂອງ ບໍລິສັດ ກໍ່ສ້າງ ພັດທະນາຕົວເມືອງລາວ ຈຳກັດຜູ້ດຽວ; ການດັດແກ້ເນື້ອໃນໃບທະບຽນວິສາຫະກິດ ຂອງ ບໍລິສັດ ສະໝຸນໄພຈິ່ງເຄີ (ລາວ) ຈຳກັດຜູ້ດຽວ; ການສະເໜີຍົກລະດັບຂອງໂຄງການກໍ່ສ້າງເຂດສາທິດເສດຖະກິດ ອຸດສາຫະກຳການ ທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ; ການສືບຕໍ່ຈັດຕັ້ງປະຕິບັດວຽກງານການສະສາງຊັບສິນບັດຂອງໂຮງງານຊີມັງ ວັງວຽງ ຫຼັງທີ 02 ແລະ ການເບີກຈ່າຍເງິນອຸດໜູນອອກການ; ການປັບປຸງກຳມະການສະພາບໍລິຫານຝ່າຍລາວ; ການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງ; ບົດດຳເນີນທຸລະກິດ 6 ເດືອນຕົ້ນປີ 2024 ແລະແຜນດຳເນີນທຸລະກິດ 6 ເດືອນທ້າຍປີ 2024 ຂອງ ກຸ່ມ ບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ; ບົດລາຍງານການເງິນ 6 ເດືອນຕົ້ນປີ 2024 ຂອງ ກຸ່ມ ບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ; ການກູ້ຢືມເງິນຈາກທະນາຄານລາວ-ຫວຽດ; ການປັບປຸງກຳມະການສະພາບໍລິຫານຝ່າຍຈີນ;ການອ່າຈ້ຽງຜູ້ອຳນວຍການໃຫຍ່ ຂອງບໍລິສັດ; ບົດວິພາກເສດຖະກິດ-ເຕັກ ນິກ ໂຄງການພັດທະນາເຂດເສດຖະກິດ - ອຸດສາຫະກຳທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແຂວງວຽງຈັນ ສປປ ລາວ; ບົດລາຍງານການປະເມີນ ແລະ ສະສາງ ຊັບສິນຂອງໂຮງງານຊີມັງວັງວຽງ ຫຼັງທີ II.

V.ຂໍ້ມູນພື້ນຖານສຳລັບຄະນະກຳມະການສະພາບໍລິຫານແລະພະນັກງານ

ຄະນະກຳມະການສະພາບໍລິຫານຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ປະກອບມີ 11 ທ່ານ, ຝ່າຍ ລາວ 4 ທ່ານ (ກຳມະການສະພາບໍລິຫານອິດສະຫຼະ 1 ທ່ານ), ຝ່າຍຈີນ 7 ທ່ານ (ກຳມະການສະພາບໍລິຫານອິດສະຫຼະ 2 ທ່ານ).

ຈົນຮອດວັນທີ 31/12/2024 ພະນັກງານຖາວອນຂອງບໍລິສັດມີຈຳນວນທັງໝົດ 54 ຄົນ.

- ຄະນະກຳມະການສະພາບໍລິຫານມີຂໍ້ມູນລະອຽດດັ່ງນີ້:



ທ່ານ ເນ້ຍ ເຫຼີຍ
11/12/1971 ສັນຊາດ ຈີນ
ປະທານສະພາບໍລິຫານ
ຜູ້ອຳນວຍການໃຫ່ຍ



ທ່ານ ວັນທອງ ສິດທິກຸນ
02/03/1960 ສັນຊາດລາວ
ຮອງປະທານສະພາບໍລິຫານ



ທ່ານ ຄຳບົນ ໄຊເລົ່າວົງ
15/02/1958 ສັນຊາດລາວ
ກຳມະການສະພາບໍລິຫານ
ຮອງຜູ້ອຳນວຍການໃຫຍ່



ທ່ານ ຕິ໋ງ ຢູ້ຕິ໋ງ
07/07/1967 ສັນຊາດຈີນ
ກຳມະການສະພາບໍລິຫານ
ຜູ້ອຳນວຍການໃຫຍ່



ທ່ານ ຈ່າງ ຈິ໋ງຫົວ
26/11/1978 ສັນຊາດຈີນ
ກຳມະການສະພາບໍລິຫານ
ຫົວໜ້າຝ່ານການເງິນ



ທ່ານ ຫວັ໋ງ ຫຼ່ຍ
01/10/1972 ສັນຊາດຈີນ
ກຳມະການສະພາບໍລິຫານ
ນັກວິສະວະກອນໃຫຍ່



ທ່ານ ສີນທະນູ ສົມພ໋ອງບຸດຕະຂັນ
20/07/1971 ສັນຊາດລາວ
ກຳມະການສະພາບໍລິຫານ
ຮອງຜູ້ອຳນວຍການໃຫຍ່



ທ່ານ ນາງ ຊ້າຍ ລິ໋ງລິ໋ງ
10/10/1949 ສັນຊາດຈີນ
ກຳມະການສະພາບໍລິຫານ



ທ່ານ ໄຕ້ ຢ໋ອງຫົວ
3/7/1973 ສັນຊາດຈີນ
ກຳມະການສະພາບໍລິຫານອິດສະຫຼະ



ທ່ານ ຫຼົ໋ວ ຮ້າວ
01/12/1977 ສັນຊາດຈີນ
ກຳມະການສະພາບໍລິຫານອິດສະຫຼະ



ທ່ານ ວິຄຳແດ໋ງ ອິນທະໄຊ
15/08/1980 ສັນຊາດລາວ
ກຳມະການສະພາບໍລິຫານອິດສະຫຼະ

VI. ແຜນການປັນຜົນ

ເນື່ອງຈາກວ່າ ບໍລິສັດກຳລັງປັບປຸງຟື້ນຟູ ແລະ ຫັນຮູບແບບທຸລະກິດ ບໍ່ທັນມີກຳໄລທີ່ຈະສາມາດປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນໄດ້, ສະນັ້ນ,ໃນປີນີ້ ຈຶ່ງບໍ່ມີແຜນການປັນຜົນປະຈຳ ປີ 2024.

VII. ວຽກງານສຳຄັນຕ່າງໆອື່ນ

1. **ຄະດີການຮ້ອງຟ້ອງ:** ບໍ່ມີ.
2. **ການລົງໂທດຕໍ່ຜູ້ບໍລິຫານຂັ້ນສູງຈາກພາກສ່ວນກ່ຽວຂ້ອງກັບການກວດກາຕິດຕາມ:** ບໍ່ມີ.
3. **ການປ່ຽນແປງຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ອຳນວຍການໃຫຍ່:** ອີງຕາມມະຕິກອງປະຊຸມວິສາມັນສະພາບໍລິຫານຂອງບໍລິສັດຄັ້ງທີ 01 ປະຈຳປີ 2024 ລົງວັນທີ 05/11/2024 ໄດ້ແຕ່ງຕັ້ງ ທ່ານ ຕິ່ງ ຢູ້ຕິ່ງ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ.
4. **ການຊື້ຮຸ້ນຂອງບໍລິສັດອື່ນ, ການຂາຍຊັບສິນຂອງບໍລິສັດ:**

   4.1 ໄດ້ເຊັນສັນຍາຊື້ຮຸ້ນ ແລະ ການເປັນຂາຮຸ້ນທີ່ຖືຮຸ້ນ 50% ຂອງສູນຜະລິດຮູບເງົາ ແລະ ລາຍການໂທລະພາບ ຈຳກັດ ຢ່າງເປັນທາງການໃນວັນທີ 06/12/2024.

   4.2 ໄດ້ເຊັນສັນຍາການໂອນຮຸ້ນ ແລະ ການເປັນຂາຮຸ້ນທີ່ຖືຮຸ້ນ 20% ຂອງບໍລິສັດ ຟາສະຕາ ໂຕແບກ ໂຄ ການຄ້າ ຈຳກັດ ໃນວັນທີ 16/12/2024.
5. **ການຄ້າຂາຍມີມູນຄ່າສູງທີ່ກ່ຽວພັນເຖິງບໍລິສັດ:** ບໍ່ມີ.
6. **ສະພາບການອິດສະຫຼະພາບຂອງບໍລິສັດແມ່:** ມີຄວາມອິດສະຫຼະດ້ານບຸກຄະລາກອນ, ດ້ານຊັບສິນ, ດ້ານບັນຊີການເງິນ, ດ້ານກົດຈະການ ແລະ ດ້ານອົງການຈັດຕັ້ງ.
7. **ການວ່າຈ້າງບໍລິສັດກວດສອບ:** ໄດ້ສືບຕໍ່ນຳໃຊ້ບໍລິການຂອງບໍລິສັດກວດສອບເດີມປະຈຳປີ 2024 ບໍ່ມີການປ່ຽນແປງ.
8. **ການເຊັນສັນຍາທີ່ສຳຄັນ ແລະ ການຄ້ຳປະກັນ**

   8.1 ໄດ້ເຊັນສັນຍາຮັບເໝົາໂຄງການກໍ່ສ້າງເຂດຣີສອດສາກົນ ໜອງສີຟ້າດອງຈັນ ວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ) ກັບບໍລິສັດກໍ່ສ້າງເລກທີ 3 ຈຳກັບ ຂຶ້ນກັບບໍລິສັດ ກໍ່ສ້າງ-ລົງທຶນ ຢຸນນານ ໃນວັນທີ 12/01/2024.

   8.2 ໄດ້ເຊັນສັນຍາຮັບເໝົາໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ ກັບ ບໍລິສັດ ກໍ່ສ້າງເລກທີ 3 ຈຳກັບ ຂຶ້ນກັບບໍລິສັດ ກໍ່ສ້າງ-ລົງທຶນ ຢຸນນານ ໃນວັນທີ 04/04/2024.

   8.3 ໄດ້ເຊັນສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບ໋ວ ກັບ ກຸ່ມບໍລິສັດ ທາງລົດໄຟແຂວງຢຸນນານ ຈຳກັດ ແລະ ບໍລິສັດ ທີ່ປຶກສາວິສະວະກຳ ຊີ້ຈ້າວ ຈຳກັດ ໃນວັນທີ 06/12/2024

   8.4 ຮອດວັນທີ 31/12/2024 ບໍ່ມີການຄ້ຳປະກັນໃດໜຶ່ງ.

ບົດດຳເນີນທຸລະກິດປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ສິ້ນສຸດລົງພຽງເທົ່ານີ້.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

ນະຄອນຫຼວງວຽງຈັນ, ວັນທີ 29/04/2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານຕິດຄັດ 04:

ບົດລາຍງານອົງກອນການເງິນປະຈຳປີ 2024
ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີບົດລາຍງານອົງກອນການເງິນປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຕໍ່ກອງປະຊຸມ ເພື່ອໃຫ້ບັນດາບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ເຊິ່ງມີເນື້ອໃນຄືດັ່ງນີ້:

I. <u>ສະພາບການດຳເນີນທຸລະກິດ ປະຈຳປີ 2024</u>

ໃນ 1 ປີທີ່ຜ່ານມາ ຄະນະອຳນວຍການໄດ້ຈັດຕັ້ງປະຕິບັດຕາມທິດທາງ ແລະ ແຜນການພັດທະນາ ຍຸດທະສາດທີ່ໄດ້ຮັບຮອງເອົາຜ່ານກອງປະຊຸມສະພາບໍລິຫານ ເຊັ່ນ : ສຳເລັດບົດວິພາກຄວາມເປັນໄປໄດ້ ຂອງໂຄງການກໍ່ສ້າງເຂດສາທິດເສດຖະກິດອຸດສາຫະກຳການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ, ແຜນການອອກແບບຂອງໂຄງການກໍ່ສ້າງພະພຸດທະຮູບຈອມພູຜາບິວ, ແຜນການສ້າງຕັ້ງມູນນິທິກ່ຽວກັບ ໂຄງການກໍ່ສ້າງພະພຸດທະຮູບຈອມພູຜາບິວ, ກຳນົດຂອບເຂດທີ່ດິນທີ່ຈະນຳໃຊ້ໃນການກໍ່ສ້າງເຂດສາທິດ ດັ່ງກ່າວ, ການສະເໜີສຳປະທານບໍ່ແຮ່ຢູ່ແຂວງຫົວພັນ, ຕົວແທນຈຳໜ່າຍຢາສູບຈີນປະຈຳລາວ ແລະ ວຽກ ງານອື່ນໆອີກ ເຊິ່ງເນື້ອໃນລາຍລະອຽດໄດ້ລະບຸໄວ້ໃນບົດລາຍງານການດຳເນີນທຸລະກິດ ປະຈຳປີ 2024, ໃນໄລຍະເວລາຂ້າມຜ່ານດັ່ງກ່າວນັ້ນ, ບໍລິສັດຍັງບໍ່ທັນມີລາຍຮັບຈາກການດຳເນີນທຸລະກິດຫຼັກ.

ປີ 2024 ບໍລິສັດ (ສັງລວມກິດຈະການ) ຂາດທຶນ 7.945.920.169 ກີບ, ໃນນັ້ນ, ບໍລິສັດແມ່ ຂາດທຶນ 4.794.154.327 ກີບ ແລະ ບັນດາບໍລິສັດລູກຂາດທຶນຈຳນວນລວມ 3.151.765.842 ກີບ ເຊິ່ງມີລາຍລະອຽດຄືດັ່ງນີ້:

1. ລາຍຮັບ

1. ລາຍຮັບຈາກທຸລະກິດອື່ນໆ ຈຳນວນ 154.204.899 ກີບ, ໃນນັ້ນ, ລາຍຮັບຈາກການເກັບຄ່າ ເຊົ່າ ຈຳນວນ 154.204.899 ກີບ.

2. ລາຍຮັບທີ່ບໍ່ແມ່ນຈາກທຸລະກິດຈຳນວນ 17.681.203.801 ກີບ, ໃນນັ້ນ, ມີລາຍຮັບຈາກການ ສະສາງສັບສົມບັດຖິ່ທີ່ ຈຳນວນ 16,861,834,985 ກີບ, ເງິນຊ່ວຍເຫຼືອລ້າ ຈຳນວນ 607.024.338 ກີບ.

2. ຄ່າໃຊ້ຈ່າຍ

1. ຄ່າໃຊ້ຈ່າຍໃນທຸລະກິດອື່ນໆ ຈຳນວນ 1.335.548.106 ກີບ ສ່ວນຫຼາຍແມ່ນຄ່າໃຊ້ຈ່າຍໃນ ການຊື້ວັດຖຸດິບ.

2. ຄ່າໃຊ້ຈ່າຍໃນການຄຸ້ມຄອງບໍລິຫານ ຈຳນວນ 16.768.250.064 ກີບ, ໃນນັ້ນ, ເງິນເດືອນ

ຂອງພະນັກງານຈຳນວນ 10.239.248.409 ກີບ, ສະຫວັດດີການຂອງພະນັກງານ ຈຳນວນ 886.709.604 ກີບ, ຄ່າໃຊ້ຈ່າຍຫ້ອງການປະຈຳວັນ ຈຳນວນ 988.644.045 ກີບ, ການນຳໃຊ້ລົດ ຈຳນວນ 738.300.705 ກີບ, ຄ່າທາງ ຈຳນວນ 129.517.722 ກີບ, ວຽກປະຊາສຳພັນ ແລະ ການຕ້ອນຮັບແຂກ ຈຳນວນ 1.376.597.908 ກີບ, ຫັກຄ່າຫຼ້ຍຫ້ຽນ ຈຳນວນ 378.865.846 ກີບ ແລະ ຄ່າໃຊ້ຈ່າຍໃນການຄຸ້ມຄອງບໍລິຫານອື່ນໆ ຈຳນວນ 1.654.372.825 ກີບ.

3. ຄ່າໃຊ້ຈ່າຍອື່ນໆໃນການດຳເນີນງານ ຈຳນວນ 7.916.563.598 ກີບ ສ່ວນຫຼາຍແມ່ນຄ່າສູນເສຍມູນຄ່າຂອງຊັບສິນຄິດໄລ່ລ່ວງໜ້າ ມີຈຳນວນ 5.966.361.211 ກີບ (ຕົ້ນທຶນວິສະວະກຳຂອງບໍ່ຖ່ານຫີນຄອນພຸກໃນໄລຍະຕົ້ນ).

4. ຄ່າໃຊ້ຈ່າຍທາງດ້ານການເງິນ ຈຳນວນ 393.237.789 ກີບ ເປັນຕົ້ນແມ່ນຈາກການແລກປ່ຽນເງິນຕາຕ່າງປະເທດ.

II. ສະພາບສັບສົມບັດ ຮອດວັນທີ 31/12/2024

	Notes	31-Dec-24	31-Dec-23
		LAK	LAK
ຊັບສິນ			
ຊັບສິນບໍ່ໝຸນວຽນ	4	1,181,534,317	1,087,455,166
ຊັບສິນ, ອາຄານ ແລະ ອຸປະກອນ	6	33,099,471,597	33,848,808,652
ຊັບສິນພວມກໍ່ສ້າງ	5	3,698,058,835	3,689,043,755
ຊັບສົມບັດຖິ່ງທີ່ບໍ່ມີຕົວຕົນ		**37,979,064,749**	**38,625,307,573**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	4,755,554,770	1,783,127,243
ເຄື່ອງໃນສາງ	8	12,324,012,453	6,880,835,715
ໜີ້ຕ້ອງຮັບທາງການຄ້າ	22	1,000,000,000	-
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	9	1,656,111,790	2,464,105,715
ເງິນສົດ	10	644,185,612	1,626,190,316
ລວມຊັບສິນໝຸນວຽນ		**20,379,864,625**	**12,754,258,989**
ລວມຊັບສິນທັງໝົດ		**58,358,929,374**	**51,379,566,562**
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	11	8,025,747,856	1,441,398,721
ເງິນລ່ວງໜ້າຈາກລູກຄ້າ	12	12,440,807,689	20,274,717,670
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	22	11,567,018,084	8,389,384,462
ພັນທະອາກອນ	13	8,327,444,701	6,119,062,956
ໜີ້ຕ້ອງສົ່ງໃຫ້ພະນັກງານ		12,131,161,070	8,274,569,469
ໜີ້ຕ້ອງສົ່ງອື່ນໆ	14	25,297,650,701	18,365,413,842
ລວມໜີ້ສິນໝຸນວຽນ		**77,789,830,101**	**62,864,547,120**

ລວມໜີ້ສິນທັງໝົດ		**77,789,830,101**	**62,864,547,120**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(84,072,394,380)	(76,126,474,211)
ລວມທຶນ		**(19,430,900,727)**	**(11,484,980,558)**
ລວມໜີ້ສິນ ແລະ ທຶນທັງໝົດ		**58,358,929,374**	**51,379,566,562**

ຮອດວັນທີ 31/12/2024 ຊັບສົມບັດຂອງບໍລິສັດມີມູນຄ່າ ຈຳນວນລວມ 58.358.929.374 ກີບ.

ປີ 2023 ໄດ້ເກັບໜີ້ຕ້ອງຮັບ ຫຼື ຫັກໜີ້ຕ້ອງຮັບ ຈຳນວນ 857.409.925 ກີບ, ໃນນັ້ນ, ເປັນເງິນສົດ ຈຳນວນ 56.066.000 ກີບ, ສ່ວນທີ່ເຫຼືອແມ່ນລູກໜີ້ເອົາຊັບສິນຂອງຕົນມາລົບຫັກໃຊ້ແທນໜີ້ສິນ.

ຮອດວັນທີ 31/12/2024 ບໍລິສັດມີໜີ້ຕ້ອງສົ່ງ ຈຳນວນ 77.789.830.101 ກີບ, ປີ 2024 ໜີ້ຕ້ອງເກັບຫຼຸດລົງ ຈຳນວນ 7.690.259.930 ກີບ ແລະ ໜີ້ຕ້ອງສົ່ງເພີ່ມຂຶ້ນ ຈຳນວນ 3.308.191.362 ກີບ, ໃນນັ້ນ, ໜີ້ຕ້ອງສົ່ງໃຫ້ບໍລິສັດ ພກອ (ຂາຮຸ້ນຝ່າຍລາວ) ຈຳນວນ 10.219.799.396 ກີບ, ໜີ້ຕ້ອງສົ່ງໃຫ້ບໍລິສັດ ຢຸນນານຊຽນຫານ (ຂາຮຸ້ນຝ່າຍຈີນ) ຈຳນວນ 11.322.872.640 ກີບ (ຈຳນວນເງິນມີການປ່ຽນແປງຍ້ອນການປ່ຽນແປງຂອງອັດຕາແລກປ່ຽນເງິນຕາ) ແລະ ໜີ້ຕ້ອງສົ່ງໃຫ້ລັດຖະບານ ຈຳນວນ 8.152.671.650 ກີບ, ໃນນັ້ນ, ມີອາກອນລາຍຮັບ ຈຳນວນ 479.656.526 ກີບ, ພັນທະຕ່າງໆທີ່ຕ້ອງໄດ້ມອບໃຫ້ລັດຖະບານ ຈຳນວນ 3.058.050.485 ກີບ ແລະ ພາສີ ອາກອນອື່ນໆ ຈຳນວນ 1.263.483.703 ກີບ.

III. <u>ສະພາບການເງິນຂອງບໍລິສັດ</u>

ຮອດວັນທີ 31/12/2024 ບໍລິສັດມີທຶນເງິນຕາ ຈຳນວນ 644.185.612 ກີບ.

ປີ 2024 ໄດ້ເກັບໜີ້ຕ້ອງຮັບ ຫຼື ຫັກໜີ້ຕ້ອງຮັບ ຈຳນວນ 857.409.925 ກີບ, ໃນນັ້ນ, ເປັນເງິນສົດ ຈຳນວນ 56.066.000 ກີບ.

ປີ 2023 ໄດ້ຮັບເງິນຈາກການສະສາງສັບສົມບັດ ຈຳນວນ 6.569.724.488 ກີບ, ຈາກການຂາຍຄອນໂດ ຈຳນວນ 1.435.687.110 ກີບ ແລະ ຮັບເງິນຊ່ວຍເຫຼືອລ້າ ຈຳນວນ 607.024.338 ກີບ, ໄດ້ຢືມເງິນຈາກບຸກຄົນ ແລະ ຂາຮຸ້ນ ຈຳນວນ 14.851.022.100 ກີບ.

ປີ 2023 ໄດ້ຊຳລະຄ່າໂຄງການກໍ່ສ້າງອາຄານທ່ອງທ່ຽວ ແລະ ວັດທະນະທຳ ຈຳນວນ 5.561.068.238 ກີບ, ເບີກຈ່າຍເງິນເດືອນ ແລະ ປະກັນສັງຄົມຈຳນວນ 5,788,661,610 ກີບ, ເບີກຈ່າຍເງິນອຸດໜຸນອອກການຂອງພະນັກງານອອກການ ຈຳນວນ 354.553.420 ກີບ, ຊຳລະອາກອນຕ່າງໆຈຳນວນ 585.250.654 ກີບ, ສ່ວນທີ່ເຫຼືອແມ່ນຄ່າໃຊ້ຈ່າຍຕ່າງໆໃນການດຳເນີນງານປະຈຳວັນ ຈຳ

ນອນ 10.500.000.000 ກີບ.

ຍັງເຫຼືອເງິນອຸດໜຸນອອກການຂອງພະນັກງານ ຈຳນວນ 3.999.356.044 ກີບ ເຊິ່ງວາງແຜນຈະຊຳລະໃຫ້ໝົດກ່ອນວັນທີ 30/06/2025.

IV.ແຜນການປັນຜົນ

ປີ 2024 ບໍລິສັດຍັງຢູ່ໃນໄລຍະເວລາພັດທະນາຂະຫຍາຍທຸລະກິດໃໝ່ຕ່າງໆ ເຮັດໃຫ້ບໍ່ມີກຳໄລທີ່ຈະສາມາດປັນຜົນໃຫ້ແກ່ຜູ້ຮຸ້ນ, ສະນັ້ນ, ຈະບໍ່ໄດ້ປັນຜົນໃຫ້ແກ່ຜູ້ຖືຮຸ້ນໃນປີ 2023.

V. ການຈັດຕັ້ງປະຕິບັດວຽກງານໃນປີ 2024

1. ຈັດສັນເງິນທຶນຂອງບໍລິສັດຕາມຄວາມເໝາະສົມ, ຄຸ້ມຄອງເງິນທຶນຂອງບໍລິສັດໃຫ້ດີ, ເບີກຈ່າຍເງິນອຸດໜຸນອອກການຂອງພະນັກງານຕາມແຜນການ, ໃຫ້ບໍລິສັດສາມາດດຳເນີນກິດຈະການຕ່າງໆຢ່າງເປັນປົກກະຕິ.
2. ເຂົ້າຮ່ວມໃນວຽກງານການຄຸ້ມຄອງບໍລິຫານມູນນິທິພຸດທະສາສະໜາ.
3. ຂຽນບົດລາຍງານການເງິນ ແລະ ສະໜັບສະໜຸນໃຫ້ແກ່ວຽກງານການເປີດເຜີຍຂໍ້ມູນຕາມລະບຽບການທີ່ກ່ຽວຂ້ອງໃນໄລຍະເວລາຫັນຮູບແບບທຸລະກິດ.
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ວຽກງານການຫັນຮູບແບບທຸລະກິດ, ການຂະຫຍາຍທຸລະກິດໃໝ່ຕ່າງໆ, ການຕໍ່ອາຍຸທີ່ດິນ, ການສະເໜີໃຫ້ເຂດສາທິດເສດຖະກິດ ອຸດສາຫະກຳການທ່ອງທ່ຽວ ແລະ ວັດທະນະທຳກາຍເປັນເຂດເສດຖະກິດພິເສດ ແລະ ວຽກງານອື່ນໆປະສົບຜົນສຳເລັດ.
5. ປະຕິບັດວຽກງານການກວດກາຊັບສິນຢ່າງເຂັ້ມງວດ ຮັກສາຄວາມປອດໄພ ແລະ ຄົບຖ້ວນຂອງຊັບສິນ.
6. ຄິດໄລ່ ແລະ ປະເມີນມູນຄ່າຊັບສິນຂອງບໍລິສັດຕາມມູນຄ່າຍຸຕິທຳເພື່ອໃຫ້ລາຄາຮຸ້ນຂອງບໍລິສັດເພີ່ມສູງຂຶ້ນ.
7. ສືບຕໍ່ປັບປຸງລະບົບການຄິດໄລ່, ລະບົບບັນຊີ ແລະການເງິນໃຫ້ສອດຄ່ອງກັບລະບົບການຄຸ້ມຄອງບໍລິ ສັດທີ່ສະໄໝໃໝ່, ຊ່ວຍເຫຼືອສ້າງກິດລະບຽບພາຍໃນບໍລິສັດທີ່ສົມບູນ.
8. ໃຫ້ວຽກງານການຄຸ້ມຄອງການເງິນຂອງບໍລິສັດ ແລະ ບັນດາບໍລິສັດລູກດຳເນີນໄປໄດ້ດີ ລວມມີວຽກ ການກວດກາຕິດຕາມການເງິນ, ການຄຸ້ມຄອງຕົ້ນທຶນ, ການວິເຄາະທາງດ້ານການເງິນ, ການຄຸ້ມຄອງ ຄວາມສ່ຽງ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ.
9. ປະຕິບັດການລົງທຶນ ແລະ ລະດົມທຶນຕາມກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ, ວາງແຜນການສຳລັບການຟື້ນຟູການຊື້ຂາຍຮຸ້ນຂອງບໍລິສັດ ແລະ ການເພີ່ມຮຸ້ນຂອງບໍລິສັດ.

ບົດລາຍງານວຽກງານການເງິນປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ສິ້ນສຸດລົງພຽງເທົ່ານີ້.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນລວມກິດຈະການ

ສຳລັບໄລຍະປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

EY

Building a better working world

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 6
ໃບລາຍງານຖານະການເງິນລວມກິດຈະການ	7 - 8
ໃບລາຍງານຜົນການດຳເນີນງານລວມກິດຈະການ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ	10
ໃບລາຍງານກະແສເງິນສົດລວມກິດຈະການ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ	13 - 36

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 11728747/E-68429455-ລວມກິດຈະການ

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ທີ່ນັບຖື

ຄຳເຫັນແບບບໍ່ອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານການເງິນລວມກິດຈະການຂອງບໍລິສັດ ແລະ ບໍລິສັດໃນເຄືອ (ລວມກັນເອີ້ນວ່າ "ກຸ່ມບໍລິສັດ") ເຊິ່ງລວມມີ ໃບລາຍງານຖານະການເງິນລວມກິດຈະການ ນະວັນທີ 31 ທັນວາ 2024, ແລະ ໃບລາຍງານຜົນການດຳເນີນງານລວມກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ ແລະ ໃບລາຍງານກະແສເງິນສົດລວມກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ, ລວມທັງບົດສະຫຼຸບຂອງນັນດານະໂຍບາຍການບັນຊີທີ່ສຳຄັນ.

ເນື່ອງຈາກຄວາມສຳຄັນຂອງບັນຫາຕ່າງໆທີ່ໄດ້ອະທິບາຍໄວ້ໃນວັກພື້ນຖານໃນການບໍ່ສະແດງຄຳເຫັນ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມພຽງພໍເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນສຳລັບການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນຕໍ່ກັບເອກະສານລາຍງານການເງິນລວມກິດຈະການດັ່ງກ່າວ.

ພື້ນຖານໃນການອອກຄຳເຫັນແບບບໍ່ສະແດງຄຳເຫັນ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນລວມກິດຈະການ, ກຸ່ມບໍລິສັດເກີດການຂາດທຶນສຸດທິຈຳນວນ 7.94 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024. ນະວັນທີດັ່ງກ່າວ, ກຸ່ມບໍລິສັດ ມີຍອດຂາດທຶນສະສົມຈຳນວນ 84 ຕື້ກີບ ແລະ ມີໜີ້ສິນໝຸນວຽນຈຳນວນ 77.7 ຕື້ກີບ ເຊິ່ງເກີນມູນຄ່າຂອງຊັບສິນໝຸນວຽນຈຳນວນ 57.4 ຕື້ກີບ. ເງື່ອນໄຂເຫຼົ່ານີ້ບົ່ງຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນທີ່ມີສາລະອັນສຳຄັນ ທີ່ເຮັດໃຫ້ເກີດຄວາມສົງໄສອັນໃຫຍ່ຫຼວງຕໍ່ຄວາມສາມາດຂອງກຸ່ມບໍລິສັດໃນການສືບຕໍ່ການດຳເນີນງານຕາມຫຼັກການແຫ່ງຄວາມສືບເນື່ອງ. ເອກະສານລາຍງານການເງິນລວມກິດຈະການ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແມ່ນໄດ້ຖືກກະກຽມບົນພື້ນຖານຫຼັກການແຫ່ງຄວາມສືບເນື່ອງ ໂດຍອີງຕາມຂໍ້ສົມມຸດຖານທີ່ວ່າກຸ່ມບໍລິສັດມີຊັບພະຍາກອນພຽງພໍ ໃນການຊຳລະໜີ້ສິນຂອງຕົນໃຫ້ກັບພາກສ່ວນທີສາມ ແລະ ພຽງພໍສຳລັບສືບຕໍ່ດຳເນີນງານໃນປີຕໍ່ໄປ ໂດຍປາສະຈາກຂໍ້ຈຳກັດຕ່າງໆ. ຄະນະອຳນວຍການຂອງກຸ່ມບໍລິສັດໄດ້ກະກຽມການຄາດການກະແສເງິນສົດເພື່ອຮອງຮັບການຊຳລະໜີ້ ແລະ ແຜນການດຳເນີນທຸລະກິດ, ໂດຍພິຈາລະນາຈາກຄວາມຄາດຫວັງທີ່ບໍ່ສາມາດໄດ້ຮັບການສະໜັບສະໜຸນຢ່າງເປັນທາງການຈາກຜູ້ຖືຮຸ້ນຂອງຕົນ ແລະ ມີຄວາມສາມາດໃນການຂາຍເຄື່ອງໃນສາງ. ຈາກຂໍ້ມູນທີ່ມີຢູ່ໃນປະຈຸບັນ, ພວກຂ້າພະເຈົ້າ ບໍ່ໄດ້ຮັບຫຼັກຖານທີ່ເໝາະສົມພຽງພໍເພື່ອຢັ້ງຢືນຂໍ້ສົມມຸດຖານຂອງຄະນະອຳນວຍການຂອງກຸ່ມບໍລິສັດ ໃນການກະກຽມການຄາດການກະແສເງິນສົດຂ້າງເທິງ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ສາມາດພິຈາລະນາຄວາມເໝາະສົມຂອງການນຳໃຊ້ຂໍ້ສົມມຸດຖານຫຼັກການແຫ່ງຄວາມສືບເນື່ອງ ໃນການກະກຽມເອກະສານລາຍງານການເງິນລວມກິດຈະການເຫຼົ່ານີ້ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024.

ບັນຫາທີ່ຄວນເອົາໃຈໃສ່

ນະໂຍບາຍບັນຊີ

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ *3* ຂອງເອກະສານລາຍງານການເງິນລວມກິດຈະການ, ເຊິ່ງໄດ້ລະບຸກ່ຽວກັບນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍກຸ່ມບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖະນະການເງິນລວມກິດຈະການຜົນການດຳເນີນງານລວມກິດຈະການ ແລະ ກະແສເງິນສົດລວມກິດຈະການກຸ່ມບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືຍອມຮັບໂດຍທົ່ວໄປ.

ບົດສະຫຼຸບຂອງກຸ່ມບໍລິສັດແມ່ນຍັງບໍ່ໄດ້ດັດແກ້ໃນບັນຫານີ້

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງຄະນະອຳນວຍການ ແລະ ຜູ້ມີອຳນາດໃນການຄວບຄຸມ ຕໍ່ເອກະສານລາຍງານການເງິນລວມກິດຈະການ

ຄະນະອຳນວຍການຂອງກຸ່ມບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນລວມກິດຈະການ ຕາມ ນະໂຍບາຍການບັນຊີທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນລວມກິດຈະການ, ແລະ ບັນດາການຄວບ ຄຸມພາຍໃນຕາມທີ່ຄະນະອຳນວຍການເຫັນວ່າ ຈຳເປັນໃນການກະກຽມເອກະສານລາຍງານການເງິນລວມກິດຈະການ ໃຫ້ມີຄວາມ ຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນລວມກິດຈະການ, ຄະນະອຳນວຍການແມ່ນຮັບຜິດຊອບໃນການປະເມີນ ຄວາມສາມາດ ຂອງກຸ່ມບໍລິສັດດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາຕ່າງໆທີ່ກ່ຽວກັບຄວາມສືບເນື່ອງຂອງການດຳເນີນທຸລະ ກິດ, ຫາກມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ ທາງຄະນະ ອຳນວຍການ ມີຈຸດປະສົງຍຸບເລີກກຸ່ມບໍລິສັດ, ຫຼື ຍຸບເລີກກິດຈະການ ຫຼື ບໍ່ມີທາງເລືອກທີ່ດຳເນີນຕໍ່ໄປໄດ້ ແຕ່ຕ້ອງໄດ້ປະຕິບັດດັ່ງກ່າວ.

ຜູ້ມີອຳນາດໃນການຄວບຄຸມ ແມ່ນມີຄວາມຮັບຜິດຊອບໃນການ ກວດກາຂະບວນການລາຍງານການເງິນ ຂອງບໍລິສັດ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບລາຍງານການເງິນລວມກິດຈະການ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນເພື່ອດຳເນີນການກວດສອບເອກະສານລາຍງານການເງິນລວມກິດຈະການຂອງກຸ່ມບໍລິສັດ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ *(ISA)* ແລະ ການອອກບົດລາຍງານຂອງນັກກວດສອບບັນຊີ. ເຖິງຢ່າງໃດ ກໍ່ຕາມ, ເນື່ອງຈາກຄວາມສຳຄັນຂອງບັນຫາທີ່ໄດ້ອະທິບາຍໃນ*ພື້ນຖານໃນການບໍ່ສະແດງຄຳເຫັນ* ໃນບົດລາຍງານຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມເພື່ອເປັນພື້ນຖານພຽງພໍໃຫ້ແກ່ການອອກຄຳເຫັນຂອງເອກະສານ ລາຍງານການເງິນລວມກິດຈະການສະບັບນີ້.

ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກກຸ່ມບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນຂອງນັກວິຊາຊີບການບັນຊີ ທີ່ອອກ ໂດຍສະພາຄຸ້ມຄອງມາດຕະຖານຈັນຍາບັນຂອງນັກບັນຊີສາກົນ (ລວມທັງມາດຕະຖານສາກົນດ້ານການເປັນເອກະລາດ)(IESBA Code) ແລະ ບັນດາເງື່ອນໄຂທາງດ້ານຈັນຍາບັນອື່ນໆທີ່ກ່ຽວຂ້ອງ ເຂົ້າໃນການກວດສອບເອກະສານລາຍງານການເງິນໃນ ສປປ ລາວ, ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດ ຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ທີ່ກ່ຽວຂ້ອງກັບເງື່ອນໄຂດັ່ງກ່າວ ແລະ ກົດລະບຽບ ຂອງສະພາວິຊາຊີບ.

ຕາງໜ້າ ແລະ ໃນນາມບໍລິສັດ ເອີນ ແອນ ຢັ໋ງ ລາວ ຈຳກັດ

ກະຊວງ ການ ບໍລິສັດ ເອີນ ແອນ ຢັ໋ງ ລາວ ຈຳກັດ Ernst & Young Lao Co.,Ltd ນະຄອນ ຫຼວງ ວຽງຈັນ

ອັນ ເລ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

A member firm of Ernst & Young Global Limited

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*31 ທັນວາ 2024 ກີບ*	*31 ທັນວາ 2023 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	1,181,534,317	1,087,455,166
ຊັບສິນພວມກໍ່ສ້າງ	6	33,099,471,597	33,848,808,652
ຊັບສິນບັດຄຶງທີ່ບໍ່ມີຕົວຕົນ	5	3,698,058,835	3,689,043,755
ລວມຊັບສິນບໍ່ໝຸນວຽນ		**37,979,064,749**	**38,625,307,573**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	4,755,554,770	1,783,127,243
ເຄື່ອງໃນສາງ	8	12,324,012,453	6,880,835,715
ໜີ້ຕ້ອງຮັບທາງການຄ້າ	9	1,000,000,000	-
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	22	1,656,111,790	2,464,105,715
ເງິນສົດ	10	644,185,612	1,626,190,316
ລວມຊັບສິນໝຸນວຽນ		**20,379,864,625**	**12,754,258,989**
ລວມຊັບສິນທັງໝົດ		**58,358,929,374**	**51,379,566,562**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*31 ທັນວາ 2024 ກີບ*	*31 ທັນວາ 2023 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	11	8,025,747,856	1,441,398,721
ເງິນລ່ວງໜ້າຈາກລູກຄ້າ	12	12,440,807,689	20,274,717,670
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	22	11,567,018,084	8,389,384,462
ພັນທະອາກອນ	13	8,327,444,701	6,119,062,956
ໜີ້ຕ້ອງສົ່ງໃຫ້ພະນັກງານ		12,131,161,070	8,274,569,469
ໜີ້ຕ້ອງສົ່ງອື່ນໆ	14	25,297,650,701	18,365,413,842
ລວມໜີ້ສິນໝຸນວຽນ		**77,789,830,101**	**62,864,547,120**
ລວມໜີ້ສິນທັງໝົດ		**77,789,830,101**	**62,864,547,120**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(84,072,394,380)	(76,126,474,211)
ລວມທຶນ		**(19,430,900,727)**	**(11,484,980,558)**
ລວມໜີ້ສິນ ແລະ ທຶນທັງໝົດ		**58,358,929,374**	**51,379,566,562**

ເນ້ຍ ເຫຼີຍ

ທ່ານ ເນ້ຍ ເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມລະບຽບການ* *ກີບ*	*ຄັງສຳຮອງເພື່ອຂະຫຍາຍອາຄານ* *ກີບ*	*ຂາດທຶນສະສົມ* *ກີບ*	*ລວມທັງໝົດ* *ກີບ*
ນະວັນທີ 1 ມັງກອນ 2023	20,002,000,000	18,385,975,511	7,704,052,546	18,549,465,596	(76,881,483,050)	(12,239,989,397)
ຂາດທຶນສຸດທິພາຍໃນປີ	-	-	-	-	755,008,839	755,008,839
ນະວັນທີ 31 ທັນວາ 2023	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(76,126,474,211)**	**(11,484,980,558)**
ນະວັນທີ 1 ມັງກອນ 2024	20,002,000,000	18,385,975,511	7,704,052,546	18,549,465,596	(76,126,474,211)	(11,484,980,558)
ຂາດທຶນສຸດທິພາຍໃນປີ	-	-	-	-	(7,945,920,169)	(7,945,920,169)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(84,072,394,380)**	**(19,430,900,727)**

ທ່ານ ເນ້ຍ ເຫຼ້ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*2024* ກີບ	*2023* ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	16	17,681,203,801	24,108,787,955
ລາຍຈ່າຍຈາກການດຳເນີນງານອື່ນໆ	17	(3,690,754,872)	(10,344,341,944)
ລາຍຈ່າຍໃນການບໍລິຫານ	18	(22,329,606,896)	(11,340,355,020)
ຂາດທຶນຈາກການດຳເນີນງານ		**(8,339,157,967)**	**2,424,090,991**
			-
ລາຍຮັບທາງການເງິນ	19	393,237,798	8,228,373
ຕົ້ນທຶນທາງການເງິນ	20	-	(1,677,310,525)
ຂາດທຶນກ່ອນອາກອນ		**(7,945,920,169)**	**755,008,839**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນສຸດທິຫຼັງອາກອນພາຍໃນປີ		**(7,945,920,169)**	**755,008,839**

ທ່ານ ເນ້ຍເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈຶ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*2024 ກີບ*	*2023 ກີບ*
ກິດຈະກຳການດຳເນີນງານ			
(ຂາດທຶນ)/ກຳໄລກ່ອນອາກອນ		**(7,945,920,169)**	**755,008,839**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	523,787,906	3,026,514,300
ເກັບຄືນເງິນແຮສຳລັບເຄື່ອງໃນສາງ	16	(8,723,578)	(610,550,245)
ເກັບຄືນເງິນແຮສຳລັບໜີ້ຫວ່ຽງຍາກ	16	(49,416,000)	(7,650,143,450)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(130,762,344)	1,217,159,590
ກຳໄລຈາກການຂາຍຊັບສິນ		(5,257,532,441)	(8,794,535,894)
ການດັດແກ້ທຶນໝຸນວຽນ:			
ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນ ທີ່ກ່ຽວຂ້ອງ		(126,925,548)	(222,082,236)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(3,188,222,341)	(1,665,724,036)
(ເພີ່ມຂຶ້ນ)/ຫຼຸດລົງຂອງເຄື່ອງໃນສາງ		(5,434,453,160)	4,598,562,382
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ ພາກສ່ວນທີ່ກ່ຽວຂ້ອງ		18,284,298,172	23,756,360,128
ລາຍຮັບດອກເບ້ຍ		68,262	8,138,373
ອາກອນກຳໄລທີ່ຈ່າຍພາຍໃນປີ		-	-
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳ ເນີນງານ		**(3,333,801,241)**	**14,418,707,751**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(620,602,137)	(22,420,000)
ເງິນສົດຈາກການຂາຍຊັບສິນບັດຄົງທີ່		5,270,692,440	8,850,060,594
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		(19,440,000)	(3,273,189,600)
ຊັບສິນພວມກໍ່ສ້າງ		(2,277,160,533)	(19,006,976,169)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**2,353,489,770**	**(13,452,525,175)**

	ບົດອະທິບາຍ ເລກທີ	*2024 ກີບ*	*2023 ກີບ*
ເງິນສົດຫຼຸດລົງສຸດທິ		(980,311,471)	966,182,576
ເງິນສົດເບື້ອງໃນໄລຍະ		1,626,190,316	643,463,066
ຜົນກະທົບຈາກຄວາມຜັນຜວນຂອງອັດຕາແລກປ່ຽນ		(1,693,233)	16,544,674
ເງິນສົດໃນທ້າຍປີ	**10**	**644,185,612**	**1,626,190,316**

ເນ້ຍເຫຼຍ

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຽ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນ ແຍກກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

EY
Building a better working world

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 7
ໃບລາຍງານຖານະການເງິນແຍກກິດຈະການ	8 - 9
ໃບລາຍງານຜົນການດຳເນີນງານແຍກກິດຈະການ	10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແຍກກິດຈະການ	11
ໃບລາຍງານກະແສເງິນສົດແຍກກິດຈະການ	12 - 13
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຍກກິດຈະການ	14 - 37

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີ່ອ້າງອີງ: 11728747/E-6849455-ແຍກກິດຈະການ

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ທີ່ນັບຖື

ຄຳເຫັນແບບບໍ່ອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນແຍກກິດຈະການ ຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ"), ເຊິ່ງລວມມີ ໃບລາຍງານຖານະການເງິນແຍກກິດຈະການ ນະວັນທີ 31 ທັນວາ 2024, ແລະ ໃບລາຍງານຜົນການດຳເນີນງານແຍກກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແຍກກິດຈະການ ແລະ ໃບລາຍງານກະແສເງິນສົດແຍກກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຍກກິດຈະການ, ລວມທັງບົດສະຫຼຸບຂອງນັນດານະໂຍບາຍການບັນຊີທີ່ສຳຄັນ.

ເນື່ອງຈາກຄວາມສຳຄັນຂອງບັນຫາຕ່າງໆທີ່ໄດ້ອະທິບາຍໄວ້ໃນວັກພື້ນຖານໃນການບໍ່ສະແດງຄຳເຫັນ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມພຽງພໍເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນສຳລັບການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນຕໍ່ກັບເອກະສານລາຍງານການເງິນແຍກກິດຈະການດັ່ງກ່າວ.

ພື້ນຖານໃນການອອກຄຳເຫັນແບບບໍ່ສະແດງຄຳເຫັນ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນແຍກກິດຈະການ, ບໍລິສັດເກີດການຂາດທຶນສຸດທິຈຳນວນ 4.8 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024. ນະວັນທີດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມຈຳນວນ 79.86 ຕື້ກີບ ແລະ ມີໜີ້ສິນໝຸນວຽນຈຳນວນ 77.26 ຕື້ກີບ ເຊິ່ງເກີນມູນຄ່າຂອງຊັບສິນໝຸນວຽນຈຳນວນ 55.54 ຕື້ກີບ. ເງື່ອນໄຂເຫຼົ່ານີ້ບົ່ງຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນທີ່ມີສາລະອັນສຳຄັນ ທີ່ເຮັດໃຫ້ເກີດຄວາມສົງໄສອັນໃຫຍ່ຫຼວງຕໍ່ຄວາມສາມາດຂອງບໍລິສັດໃນການສືບຕໍ່ການດຳເນີນງານຕາມຫຼັກການແຫ່ງຄວາມສືບເນື່ອງ. ເອກະສານລາຍງານການເງິນແຍກກິດຈະການ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແມ່ນໄດ້ຖືກກະກຽມບົນພື້ນຖານຫຼັກການແຫ່ງຄວາມສືບເນື່ອງ ໂດຍອີງຕາມຂໍ້ສົມມຸດຖານທີ່ວ່າບໍລິສັດມີຊັບພະຍາກອນພຽງພໍ ໃນການຊຳລະໜີ້ສິນຂອງຕົນໃຫ້ກັບພາກສ່ວນທີສາມ ແລະ ພຽງພໍສຳລັບສືບຕໍ່ດຳເນີນງານໃນປີຕໍ່ໄປ ໂດຍປາສະຈາກຂໍ້ຈຳກັດຕ່າງໆ. ຄະນະອຳນວຍການຂອງບໍລິສັດໄດ້ກະກຽມການຄາດການກະແສເງິນສົດເພື່ອຮອງຮັບການຊຳລະໜີ້ ແລະ ແຜນການດຳເນີນທຸລະກິດ, ໂດຍພິຈາລະນາຈາກຄວາມຄາດຫວັງທີ່ບໍ່ສາມາດໄດ້ຮັບການສະໜັບສະໜຸນຢ່າງເປັນທາງການຈາກຜູ້ຖືຮຸ້ນຂອງຕົນ ແລະ ມີຄວາມສາມາດໃນການຂາຍເຄື່ອງໃນສາງ. ຈາກຂໍ້ມູນທີ່ມີຢູ່ໃນປະຈຸບັນ, ພວກຂ້າພະເຈົ້າ ບໍ່ໄດ້ຮັບຫຼັກຖານທີ່ເໝາະສົມພຽງພໍເພື່ອຢັ້ງຢືນຂໍ້ສົມມຸດຖານຂອງຄະນະອຳນວຍການຂອງບໍລິສັດ ໃນການກະກຽມການຄາດການກະແສເງິນສົດຂ້າງເທິງ. ດັ່ງນັ້ນ, ພວກຂ້າພະເຈົ້າ ຈຶ່ງບໍ່ສາມາດພິຈາລະນາຄວາມເໝາະສົມຂອງການນຳໃຊ້ຂໍ້ສົມມຸດຖານຫຼັກການແຫ່ງຄວາມສືບເນື່ອງ ໃນການກະກຽມເອກະສານລາຍງານການເງິນແຍກກິດຈະການເຫຼົ່ານີ້ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024.

A member firm of Ernst & Young Global Limited

Building a better working world

ບັນຫາທີ່ຄວນເອົາໃຈໃສ່

ນະໂຍບາຍບັນຊີ

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແຍກກິດຈະການ, ເຊິ່ງໄດ້ລະບຸກ່ຽວກັບ ນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖະນະການເງິນແຍກກິດຈະການຜົນການດຳເນີນງານແຍກກິດຈະການ ແລະ ກະແສເງິນສົດແຍກກິດຈະການບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນ ທີ່ຖືຍອມຮັບໂດຍທົ່ວໄປ.

ບົດສະຫຼຸບຂອງບໍລິສັດແມ່ນຍັງບໍ່ໄດ້ດັດແກ້ໃນບັນຫານີ້

ຄວາມຮັບຜິດຊອບຂອງຄະນະອຳນວຍການ ແລະ ຜູ້ມີອຳນາດໃນການຄວບຄຸມ ຕໍ່ເອກະສານລາຍງານການເງິນແຍກກິດຈະການ

ຄະນະອຳນວຍການຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ ຕາມ ນະໂຍບາຍການບັນຊີທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແຍກກິດຈະການ, ແລະ ບັນດາການຄວບ ຄຸມພາຍໃນຕາມທີ່ຄະນະອຳນວຍການເຫັນວ່າ ຈຳເປັນໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ ໃຫ້ມີຄວາມ ຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ, ຄະນະອຳນວຍການແມ່ນຮັບຜິດຊອບໃນການປະເມີນ ຄວາມສາມາດ ຂອງບໍລິສັດດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາຕ່າງໆທີ່ກ່ຽວກັບຄວາມສືບເນື່ອງຂອງການດຳເນີນທຸລະກິດ, ຫາກມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ ທາງຄະນະອຳນວຍ ການ ມີຈຸດປະສົງຍຸບເລີກບໍລິສັດ, ຫຼື ຍຸບເລີກກິດຈະການ ຫຼື ບໍ່ມີທາງເລືອກທີ່ດຳເນີນຕໍ່ໄປໄດ້ ແຕ່ຕ້ອງໄດ້ປະຕິບັດດັ່ງກ່າວ.

ຜູ້ມີອຳນາດໃນການຄວບຄຸມ ແມ່ນມີຄວາມຮັບຜິດຊອບໃນການ ກວດກາຂະບວນການລາຍງານການເງິນ ຂອງບໍລິສັດ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນແຍກກິດຈະການ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນເພື່ອດຳເນີນການກວດສອບເອກະສານລາຍງານການເງິນແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ *(ISA)* ແລະ ການອອກບົດລາຍງານຂອງນັກກວດສອບບັນຊີ. ເຖິງຢ່າງໃດ ກໍ່ຕາມ, ເນື່ອງຈາກຄວາມສຳຄັນຂອງບັນຫາທີ່ໄດ້ອະທິບາຍໃນ*ພື້ນຖານໃນການບໍ່ສະແດງຄຳເຫັນ* ໃນບົດລາຍງານຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມເພື່ອເປັນພື້ນຖານພຽງພໍໃຫ້ແກ່ການອອກຄຳເຫັນຂອງເອກະສານ ລາຍງານການເງິນແຍກກິດຈະການສະບັບນີ້.

ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນຂອງນັກວິຊາຊີບການບັນຊີ ທີ່ອອກໂດຍ ສະພາຄຸ້ມຄອງມາດຕະຖານຈັນຍາບັນຂອງນັກບັນຊີສາກົນ (ລວມທັງມາດຕະຖານສາກົນດ້ານການເປັນເອກະລາດ)(IESBA Code) ແລະ ບັນດາເງື່ອນໄຂທາງດ້ານຈັນຍາບັນອື່ນໆທີ່ກ່ຽວຂ້ອງ ເຂົ້າໃນການກວດສອບເອກະສານລາຍງານການເງິນໃນ ສປປ ລາວ, ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດ ຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ທີ່ກ່ຽວຂ້ອງກັບເງື່ອນໄຂດັ່ງກ່າວ ແລະ ກົດລະບຽບຂອງ ສະພາວິຊາຊີບ.

ຕາງໜ້າ ແລະ ໃນນາມບໍລິສັດ ເອິນ ແອນ ຢັ ງ ລາວ ຈຳກັດ

ການ ບໍລິສັດ ເອິນແອນຢັ ງລາວ ຈຳກັດ Ernst & Young Lao Co.,Ltd ນະຄອນ ຫຼວງ ວຽງຈັນ

ອັນ ເລ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

A member firm of Ernst & Young Global Limited

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແຍກກິດຈະການ
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*31 ທັນວາ 2024 ກີບ*	*31 ທັນວາ 2023 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	762,996,896	569,628,666
ຊັບສິນພວມກໍ່ສ້າງ	6	30,673,610,031	33,848,808,652
ຊັບສິນບັດຖຶກທີ່ບໍ່ມີຕົວຕົນ	5	3,681,415,835	3,689,043,755
ການລົງທຶນໃນບໍລິສັດໃນເຄືອ	7	5,203,557,146	1,189,235,074
ລວມຊັບສິນບໍ່ໝຸນວຽນ		**40,321,579,908**	**39,296,716,147**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	8	4,322,776,548	1,705,010,743
ເຄື່ອງໃນສາງ	9	12,324,012,453	6,880,835,715
ໜີ້ຕ້ອງຮັບຈາກພາກສ່ວນອື່ນທີ່ກ່ຽວຂ້ອງ	23	2,847,957,610	224,362,213
ໜີ້ຕ້ອງຮັບທາງການຄ້າ	10	1,656,111,790	2,464,105,715
ເງິນສົດ	11	574,997,658	1,606,207,716
ລວມຊັບສິນໝຸນວຽນ		**21,725,856,059**	**12,880,522,102**
ລວມຊັບສິນທັງໝົດ		**62,047,435,967**	**52,177,238,249**

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແຍກກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*31 ທັນວາ 2024 ກີບ*	*31 ທັນວາ 2023 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	12	8,025,747,856	1,441,398,721
ເງິນລ່ວງໜ້າຈາກລູກຄ້າ	13	12,440,807,689	20,274,717,670
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	23	12,887,018,084	8,389,384,462
ພັນທະອາກອນ	14	8,152,671,650	6,109,246,395
ໜີ້ຕ້ອງສົ່ງໃຫ້ພະນັກງານ		11,074,331,574	8,019,276,919
ໜີ້ຕ້ອງສົ່ງອື່ນໆ	15	24,682,695,701	18,364,896,342
ລວມໜີ້ສິນໝຸນວຽນ		**77,263,272,554**	**62,598,920,509**
ລວມໜີ້ສິນທັງໝົດ		**77,263,272,554**	**62,598,920,509**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	16	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(79,857,330,240)	(75,063,175,913)
ລວມທຶນ		**(15,215,836,587)**	**(10,421,682,260)**
ລວມໜີ້ສິນ ແລະ ທຶນທັງໝົດ		**62,047,435,967**	**52,177,238,249**

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານແຍກກິດຈະການ
ປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*2024* ກີບ	*2023* ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	17	17,681,203,801	24,108,787,955
ລາຍຈ່າຍຈາກການດຳເນີນງານອື່ນໆ	18	(3,681,724,728)	(9,810,203,397)
ລາຍຈ່າຍໃນການບໍລິຫານ	19	(19,168,707,315)	(11,325,016,316)
ຂາດທຶນຈາກການດຳເນີນງານ		**(5,169,228,242)**	**2,973,568,242**
ລາຍຮັບທາງການເງິນ	20	375,073,915	8,138,373
ຕົ້ນທຶນທາງການເງິນ	21	-	(1,163,399,478)
ຂາດທຶນກ່ອນອາກອນ		**(4,794,154,327)**	**1,818,307,137**
ລາຍຈ່າຍອາກອນກຳໄລ	22	-	-
ຂາດທຶນສຸດທິຫຼັງອາກອນພາຍໃນປີ		**(4,794,154,327)**	**1,818,307,137**

ທ່ານ ເນັຍເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຽ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ	*ມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມລະບຽບການ ກີບ*	*ຄັງສຳຮອງເພື່ອຂະຫຍາຍອາຄານ ກີບ*	*ຂາດທຶນສະສົມ ກີບ*	*ລວມທັງໝົດ ກີບ*
ນະວັນທີ 1 ມັງກອນ 2023	20,002,000,000	18,385,975,511	7,704,052,546	18,549,465,596	(76,881,483,050)	(12,239,989,397)
ກຳໄລສຸດທິສຳລັບປີ	-	-	-	-	1,818,307,137	1,818,307,137
ນະວັນທີ 31 ທັນວາ 2023	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(75,063,175,913)**	**(10,421,682,260)**
ນະວັນທີ 1 ມັງກອນ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(75,063,175,913)**	**(10,421,682,260)**
ຂາດທຶນສຸດທິສຳລັບປີ	-	-	-	-	(4,794,154,327)	(4,794,154,327)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(79,857,330,240)**	**(15,215,836,587)**

ເມ້ຍເຫຼ່ຍ

ທ່ານ ເມ້ຍ ເຫຼ່ຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທ່ານ ຈ່າງ ຈຶ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານກະແສເງິນສົດແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	*2024 ກີບ*	*2023 ກີບ*
ກິດຈະກຳການດຳເນີນງານ			
(ຂາດທຶນ)/ກຳໄລ ກ່ອນອາກອນ		**(4,794,154,327)**	**1,818,307,137**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	404,116,126	3,026,514,300
ເກັບຄືນເງິນແຮສຳລັບເຄື່ອງໃນສາງ	17	(8,723,578)	(610,550,245)
ເກັບຄືນເງິນແຮສຳລັບໜີ້ທວງຍາກ	17	(49,416,000)	(7,650,143,450)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(104,188,276)	1,217,159,590
ກຳໄລຈາກການຂາຍຊັບສິນ		(5,254,392,318)	(8,794,535,894)
ການດັດແກ້ທຶນໝຸນວຽນ:			
(ເພີ່ມຂຶ້ນ)/ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ		(1,750,520,938)	(222,082,236)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(2,833,456,321)	(1,665,724,036)
(ເພີ່ມຂຶ້ນ)/ຫຼຸດລົງຂອງເຄື່ອງໃນສາງ		(5,434,453,160)	4,598,562,382
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ພາກສ່ວນທີ່ກ່ຽວຂ້ອງ		18,905,808,237	23,862,314,306
ລາຍຮັບດອກເບ້ຍ		68,262	8,138,373
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳເນີນງານ		**(919,312,293)**	**15,587,960,227**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(589,856,436)	(22,420,000)
ເງິນສົດຈາກການຂາຍຊັບສິນບັດຄົງທີ່		5,254,392,318	8,850,060,594
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		-	(3,273,189,600)
ການລົງທຶນກັບບໍລິສັດໃນເຄືອ		(4,014,322,072)	(1,189,235,074)
ຊັບສິນພວມກໍ່ສ້າງ		(760,529,984)	(19,006,976,169)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**(110,316,174)**	**(14,641,760,249)**

	ບົດອະທິບາຍ ເລກທີ	*2024 ກີບ*	*2023 ກີບ*
ເງິນສົດ(ຫຼຸດລົງ)/ເພີ່ມຂຶ້ນສຸດທິ		(1,029,628,467)	946,199,978
ເງິນສົດເບື້ອງຕົ້ນໃນໄລຍະ		1,606,207,716	643,463,064
ຜົນກະທົບຈາກຄວາມຜັນຜວນຂອງອັດຕາ ແລກປ່ຽນ		(1,581,591)	16,544,674
ເງິນສົດໃນທ້າຍປີ	**11**	**574,997,658**	**1,606,207,716**

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈຶ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ເອກະສານຄັດຕິດ : 05

ກ່ຽວກັບການອ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີ ກ່ຽວກັບການອ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງ ສະມາຊິກສະພາບໍລິຫານຂອງບໍລິສັດ ຕໍ່ກອງປະຊຸມ ເພື່ອໃຫ້ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

I. ການອ່າຈ້າງຜູ້ອຳນວຍການໃຫຍ່

ເພື່ອໃຫ້ສອດຄ່ອງກັບການພັດທະນາຍຸດທະສາດ ແລະ ຕອບສະໜອງຄວາມຕ້ອງການຂອງ ການບໍລິຫານງານການດຳເນີນທຸລະກິດຂອງບໍລິສັດໃນຍຸກໃໝ່, ສະເໜີວ່າຈ້າງ ທ່ານ ຕິ່ງ ຢູ້ຕິ່ງ ເປັນ ຜູ້ອຳນວຍການໃຫຍ່ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເພື່ອຮັບຜິດຊອບ ການບໍລິຫານງານ ແລະ ວຽກການດຳເນີນທຸລະກິດປະຈຳວັນຂອງບໍລິສັດ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 1 ປີ 2024 ຂອງບໍລິສັດ, ສະນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

II. ການປ່ຽນແປງສະມາຊິກສະພາບໍລິຫານ

1. ເນື່ອງຈາກວ່າ ທ່ານ ວິຈິດ ສຸວັນນະລາດ ມີອາຍຸກະສຽນຮອດກຳນົດພັກຜ່ອນເຂົ້າຮັບອຸດໜູນບຳ ນານ ຕາມລະບຽບການ ແລະ ກົດໝາຍທີ່ກຳນົດໄວ້ ໄດ້ອອກຈາກຕຳແໜ່ງ ກຳມະການສະພາບໍລິຫານ, ສະນັ້ນ, ຈຶ່ງສະເໜີແຕ່ງຕັ້ງ ທ່ານ ສິນທະນູ ສິມຟອງບຸດຕະຂັນ ຮອງອຳນວຍການໃຫຍ່ ກຸ່ມບໍລິສັດ ທ່ອງ ທ່ຽວ ວັດທະນະທຳລາວ ມະຫາຊົນ ເປັນກຳມະການສະພາບໍລິຫານຜູ້ໃໝ່ຂອງບໍລິສັດ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສາມັນສະພາບໍລິຫານ ສະໄໝ ທີ 10 ຄັ້ງທີ 4 ປີ 2024 ຂອງບໍລິສັດ, ສະນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

2. ເນື່ອງຈາກວ່າ ທ່ານ ວົງວິຈິດ ແກ້ວວົງກົດ ມີເຫດຜົນສ່ວນຕົວ ໄດ້ອອກຈາກຕຳແໜ່ງ ກຳມະການ ສະພາບໍລິຫານອິດສະຫຼະ, ສະນັ້ນ, ຈຶ່ງສະເໜີແຕ່ງຕັ້ງ ທ່ານ ວິຄຳແດງ ອິນທະໄຊ ຮອງຫົວໜ້າພະແນກ ການເງິນ-ການບັນຊີ ສຳນັກງານໃຫຍ່ ບໍລິສັດ ລັດວິສາຫະກິດ ພກອ ເປັນກຳມະການສະພາບໍລິຫານ ອິດສະຫຼະຜູ້ໃໝ່ຂອງບໍລິສັດ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສາມັນສະພາບໍລິຫານ ສະໄໝ ທີ 10 ຄັ້ງທີ 4 ປີ 2024 ຂອງບໍລິສັດ, ສະນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ

ແລະ ຮັບຮອງ.

3. ເນື່ອງຈາກວ່າ ທ່ານ ຕິ່ງ ເຊີ້ນຊູ້ ມີເຫດຜົນສ່ວນຕົວ ໄດ້ອອກຈາກຕຳແໜ່ງ ກຳມະການສະພາບໍລິຫານ, ສະນັ້ນ, ຈຶ່ງສະເໜີແຕ່ງຕັ້ງ ທ່ານ ຕິ່ງ ຢູ້ຕິ່ງ ເປັນກຳມະການສະພາບໍລິຫານຜູ້ໃໝ່.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມວິສາມັນສະພາບໍລິຫານຄັ້ງທີ 1 ປີ 2024 ຂອງບໍລິສັດ, ສະນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

- ເອກະສານຕິດຄັດ 06 : ຊີວະປະຫວັດຫຍໍ້ ທ່ານ ຕິ່ງ ຢູ້ຕິ່ງ
- ເອກະສານຕິດຄັດ 07 : ຊີວະປະຫວັດຫຍໍ້ ທ່ານ ສິນທະນູ ສົມຟອງບຸດຕະຂັນ
- ເອກະສານຕິດຄັດ 08 : ຊີວະປະຫວັດຫຍໍ້ ທ່ານ ວິຄຳແດງ ອິນທະໄຊ

ນະຄອນຫຼວງວຽງຈັນ, ວັນທີ 29/04/2025
ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານຕິດຄັດ 06 : ຊີວະປະຫວັດຫຍໍ້ ທ່ານ ຕິ່ງ ຢູ້ຕົ່ງ

ຊີວະປະຫວັດຫຍໍ້

	**ຊື່ ແລະ ນາມສະກຸນ:** ຕິ່ງ ຢູ້ຕົ່ງ 姓名： 丁育东	
	ວັນເດືອນປີເກີດ: 1967/07/07 出生日期：1967 年 07 月 07 日	
	ສັນຊາດ: ຈີນ 国籍：中国	
ປະສົບການການຮຽນ 学习经历	ປີ 1986 ຮຽນຈົບຈາກ ມະຫາວິທະຍາໄລ ອ່ານຮຸ່ຍ ສາຂາການເງິນ 1986 年毕业于安徽大学金融专业	
ປະສົບການການເຮັດວຽກ 工作经历	1990-2006	ບໍລິສັດ ຈິ້ນຈ່ຽງເຈ່ຍຊິ້ນ ການຄ້າ ຈຳກັດ 晋江佳信贸易有限公司
	2007-2024	ບໍລິສັດ ເຈ່ຍທ້ານ (ຟູຈ້ຽນ) ທຸລະກິດ ຈຳກັດ 佳泰（福建）实业有限公司
	2024.10.	ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ 老挝文化旅游集团股份有限公司

ເອກະສານຕິດຄັດ 07 : ຊີວະປະຫວັດຫຍໍ້ ທ່ານ ສິນທະນູ ສົມຟອງບຸດຕະຂັນ

ຊີວະປະຫວັດຫຍໍ້



		ຊື່ ແລະ ນາມສະກຸນ: ສະຫາຍ ສິນທະນູ ສົມຟອງບຸດຕະຂັນ **姓名：** 新大陆 松丰布达坎
		ວັນເດືອນປີເກີດ: 20/07/1971 **出生日期：** 1971 年 07 月 20 日
		ສັນຊາດ: ລາວ **国籍：** 老挝
ປະສົບການ ການຮຽນ 学习经历	1990-1991	ຮຽນພາສາ ຈີນຢູ່ ມ.ສ ລຽວໂຕຮ 寮都公学学习汉语
	1992	ຮຽນສາຂາເຕັກໂນໂລຊີອຸດສາຫະກຳຊີມັ້ງແບບເຕົ່າຕັ້ງ ຢູ່ ເມືອງຄຸນມິງ ແຂວງຢຸນນານ ສປ ຈີນ 中国云南昆明学习立窑水泥工业技术
	2001	ຮຽນສາຂາເຕັກໂນໂລຊີອຸດສາຫະກຳຊີມັ້ງລະບົບເຕົ່າປັ່ນແບບແຫ້ງ ຢູ່ ເມືອງທ່ຽນຈິ່ນ ສປ ຈີນ 中国天津学习干法水泥回转窑工业技术
	2012	ຮ່ຳຮຽນຈົບປໍລິນຍາຕີ ສາຂາ ບໍລິຫານທຸລະກິດ 工商管理本科毕业
ປະສົບການ ການເຮັດວຽກ 工作经历	1993-2000	ເຮັດວຽກຢູ່ຮ/ງ ຊີມັ້ງວັ້ງວຽງຫຼັ້ງ1 - ພ.ກ.ອ ຫົວໜ້າຫ້ອງວິໄຈ-ເຕັກໂນໂລຊີ 万荣水泥 1 厂 分析-技术室主任
	2000-2021	ເຮັດວຽກຢູ່ຮ/ງ ຊີມັ້ງວັ້ງວຽງຫຼັ້ງ2 - ບ.ຊ.ລ 万荣水泥 2 厂
	2002	ແຕ່ງຕັ້ງມາເປັນຮອງອຳນວຍການຢູ່ຮ/ງ ຊີມັ້ງວັ້ງວຽງຫຼັ້ງ2 - ບ.ຊ.ລ 万荣水泥 2 厂 副厂长
	2013	ແຕ່ງຕັ້ງຍ້າຍມາເປັນຮອງພະແນກ ຫ້ອງການບໍລິຫານ-ຈັດຕັ້ງ ຢູ່ ບ.ຊ.ລ 老挝水泥有限公司 行政组织办公室副主任
	2022	ຮັບຄືນເປັນຮອງຫົວໜ້າພະແນກ ຫ້ອງການບໍລິຫານ ພ.ກ.ອ DAI 公司 行政办公室副主任
	2023	ແຕ່ງຕັ້ງມາເປັນຫົວໜ້າ ຫ້ອງການບໍລິຫານ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ 老挝文化旅游集团股份有限公司 办公室主任
	2024	ແຕ່ງຕັ້ງມາເປັນຮອງຜູ້ອຳນວຍການ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ 老挝文化旅游集团股份有限公司 副总经理

ເອກະສານຕິດຄັດ 08 : ຊີວະປະຫວັດຫຍໍ້ ທ່ານ ວິຄຳແດງ ອິນທະໄຊ

ຊີວະປະຫວັດຫຍໍ້

<table>
<tr><td colspan="2" rowspan="3"></td><td>ຊື່ ແລະ ນາມສະກຸນ: ວິຄຳແດງ ອິນທະໄຊ
姓名：维康登 因塔塞</td></tr>
<tr><td>ວັນເດືອນປີເກີດ: 15/08/1980
出生日期：1980 年 08 月 15 日</td></tr>
<tr><td>ສັນຊາດ: ລາວ
国籍：老挝</td></tr>
<tr><td rowspan="2">ປະສົບການການຮຽນ
学习经历</td><td>1997-2000</td><td>ຮຽນບໍລິຫານທຸລະກິດ ຊັ້ນກາງ ໂຮງຮຽນເຕັກນິກປາກປ່າສັກ
巴巴萨技术学校 工商管理</td></tr>
<tr><td>2007</td><td>ເຂົ້າຮຽນເຊື່ອມຕໍ່ ຊັ້ນສູງ ໂຮງຮຽນເຕັກນິກປາກປ່າສັກ ສາຂາການບັນຊີ
巴巴萨技术学校 会计</td></tr>
<tr><td rowspan="3">ປະສົບການເຮັດວຽກ
工作经历</td><td>2004</td><td>ເຂົ້າສັງກັດ ບໍລິສັດ ລັດວິສາຫະກິດ ພກອ
入职老挝国有农业工业发展与进出口贸易服务公司</td></tr>
<tr><td>2019</td><td>ເຮັດວຽກຢູ່ ໂຮງງານຊີມັງລາວວັງວຽງ ຈຳກັດ (ຫຼັງ3)
就职于老挝万荣水泥有限公司（三厂）</td></tr>
<tr><td>2023</td><td>ແຕ່ງຕັ້ງມາເປັນຮອງພະແນກການເງິນ-ການບັນຊີ ບໍລິສັດ ລັດວິສາຫະກິດ ພກອ
老挝国有农业工业发展与进出口贸易服务公司 财务会计部副经理</td></tr>
</table>

ເອກະສານຄັດຕິດ 09 :

ກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີ ກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ຕໍ່ກອງປະຊຸມ ເພື່ອໃຫ້ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

ບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ເປັນບໍລິສັດທີ່ສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍຂອງ ລາວ, ຈົດທະບຽນໃນວັນທີ 14/05/2024, ທຶນຈົດທະບຽນ 20.000.000.000 ກີບ, ໃບທະບຽນເລກທີ 1614/ຈທວ, ຜູ້ຖືຮຸ້ນປະກອບມີດັ່ງນີ້:

ລ/ດ	ຜູ້ຖືຮຸ້ນ	ອັດຕາສ່ວນການຖືຮຸ້ນ
01	ທ່ານ SI SHENGBIN	50%
02	ທ່ານ MU ZIJIA	50%

ທາງບໍລິສັດວາງແຜນຈະຊື້ຮຸ້ນຂອງບໍລິສັດດັ່ງກ່າວໃນຈຳນວນ 20%, ພ້ອມປ່ຽນນິຕິບຸກຄົນຂອງ ບໍລິສັດດັ່ງກ່າວເປັນ ທ່ານ ຕິ່ງ ຢູ່ຕິ່ງ, ຫຼັງຈາກສຳເລັດການຊື້ຂາຍຮຸ້ນແລ້ວ ຜູ້ຖືຮຸ້ນຂອງບໍລິສັດດັ່ງກ່າວປະກອບມີດັ່ງນີ້:

ລ/ດ	ຜູ້ຖືຮຸ້ນ	ອັດຕາສ່ວນການຖືຮຸ້ນ
01	ທ່ານ SI SHENGBIN	40%
02	ທ່ານ MU ZIJIA	40%
03	ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ	20%

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

ນະຄອນຫຼວງວຽງຈັນ, ວັນທີ 29/04/2025
ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານຄັດຕິດ 10 :

ກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີ ກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ ຕໍ່ກອງປະຊຸມ ເພື່ອໃຫ້ ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ.

ທາງບໍລິສັດວາງແຜນຈະຂຶ້ນທະບຽນບໍລິສັດລູກ 2 ແຫ່ງ : ເຊິ່ງມີຊື່ບໍລິສັດ ແລະ ຂອບເຂດທຸລະກິດ ດັ່ງນີ້:

1. ບໍລິສັດ ສະຖາບານການສຳຫຼວດ ແລະ ອອກແບບ ຈຳກັດຜູ້ດຽວ: ມີຈຸດປະສົງພັດທະນາດ້ານ ການສຳຫຼວດ ແລະ ອອກແບບ, ການໃຫ້ຄຳປຶກສາ, ການກວດກາເຕັກນິກ, ການກວດກາ ທົດລອງ ຮັບ ເໝົາໂຄງການວິສະວະກຳລວມຕໍ່ໂຄງການກໍ່ສ້າງເສັ້ນທາງລົດໄຟ, ເສັ້ນທາງຫຼວງ, ຫຼໍ່ຫຼອມໂລຫະ, ພະລັງ ງານໄຟຟ້າ, ນ້ຳມັນເຊື້ອໄຟ, ອຸດສາຫະກຳເຄມີ, ສະໜາມບິນ, ເຄຫາສະຖານ, ສວນອຸດສາຫະກຳ, ສິ່ງຕິດ ຕັ້ງອຳນວຍຄວາມສະດວກ, ສູນໃຈກາງການຄົມມະນາຄົມ, ການຄຸ້ມຄອງໄພພິບັດທາງທຳລະນີສາດ, ການ ສຳຫຼວດຊັບພະນາກອນບໍ່ແຮ່, ການອອກແບບ ແລະ ສ້າງແຜນການຂຸດຄົ້ນ ແລະ ຟື້ນຟູບໍ່ແຮ່, ລະບົບສະ ໜອງນ້ຳ, ລະບົບຊ້ຳລະນ້ຳເປື້ອນ ແລະ ສິ່ງເສດເຫຼືອແຂງຕົວ, ຜະລິດໄຟຟ້າດ້ວຍລະລັງງານສີຂຽວ, ການ ຮັກສາ ແລະ ຟື້ນຟູສິ່ງແວດລ້ອມ ແລະ ໂຄງການອື່ນໆອີກ.

2. ບໍລິສັດ ເຄື່ອງຈັກ ແລະ ອຸດປະກອນວິສະວະກຳ ລາວ ຈຳກັດ: ຜ່ານການປຶກສາຫາລືກັນເປັນຫຼາຍ ຄັ້ງ ລະຫວ່າງທາງບໍລິສັດ ແລະ ບໍລິສັດ ລາວເບົາຈີ ເອັນຈິເນຍຣິ້ງ ເມຊິນເນີຣີ ຈຳກັດ, ທັງສອງຝ່າຍເຫັນດີ ຮ່ວມກັນສ້າງບໍລິສັດ ເຄື່ອງຈັກ ແລະ ອຸດປະກອນວິສະວະກຳ ລາວ ຈຳກັດ, ທາງບໍລິສັດຈະຖືຮຸ້ນ 51% ແລະ ບໍລິສັດ ລາວເບົາຈີ ເອັນຈິເນຍຣິ້ງ ເມຊິນເນີຣີ ຈຳກັດດັ່ງກ່າວຈະຖືຮຸ້ນ 49%, ຂອບເຂດທຸລະກິດ ເປັນຕົ້ນມີການຈຳໜ່າຍ, ໃຫ້ເຊົ່າ, ສ້ອມແປງ, ຝຶກອົບຮົມ, ໃຫ້ຄຳປຶກສາໂຄງການວິສະວະກຳ ແລະອື່ນໆ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ຮັບຮອງ.

ນະຄອນຫຼວງວຽງຈັນ, ວັນທີ 29/04/2025
ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານຄັດຕິດ 11:

ໃບມອບສິດ

ຂ້າພະເຈົ້າ.....ສັນຊາດ.....
ບັດປະຈຳຕົວ/ບັດສະປໍເລກທີ..... ID card/passport NO:.....
ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....
ເປັນຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ມີຮຸ້ນທີ່ຖືຈຳນວນ.....
ຮຸ້ນ ເຊິ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ.

ຂໍມອບໝາຍ ທ່ານ/ທ່ານນາງ.....ບັດປະຈຳຕົວ/ບັດສະປໍເລກທີ.....
ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....
ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະ ເຈົ້າຢູ່ໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ຈະຈັດຂຶ້ນ ໃນວັນທີ 30 ເມສາ 2025 ຢູ່ຫ້ອງປະຊຸມໃຫ່ຍ ຊັ້ນ 4 ບໍລິສັດລັດວິສາຫະກິດ ພັດທະນາກະສິກຳ - ອຸດສາຫະກຳ ບໍລິການ ແລະ ການຄ້າຂາອອກ-ຂາເຂົ້າ ນະຄອນຫຼວງວຽງຈັນ.

1. ຂ້າພະເຈົ້າອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກໜຶ່ງ ຈາກສອງທາງເລືອກລຸ່ມນີ້)

□ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວສົມຄວນ;

□ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນເຫັນດີ ຫຼື ບໍ່ເຫັນດີໃນທຸກໆວາລະລຸ່ມນີ້)

ວາລະທີ 1	ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ບໍລິສັດ	□ເຫັນດີ □ບໍ່ເຫັນດີ
ວາລະທີ 2	ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ	□ເຫັນດີ □ບໍ່ເຫັນດີ
ວາລະທີ 3	ບົດລາຍງານການເງິນ ປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ	□ເຫັນດີ □ບໍ່ເຫັນດີ
ວາລະທີ 4	ການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກ ສະພາບໍລິຫານຂອງບໍລິສັດ	□ເຫັນດີ □ບໍ່ເຫັນດີ
ວາລະທີ 5	ການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ	□ເຫັນດີ □ບໍ່ເຫັນດີ
ວາລະທີ 6	ກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ	□ເຫັນດີ □ບໍ່ເຫັນດີ

2. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

3. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ບໍ່ຈະແຈ້ງ ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

4. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ຖືວ່າຂ້າພະເຈົ້າ

ໄດ້ກະທຳເອງທຸກປະການ.

5. ໃບມອບສິດສະບັບນີ້ມີຜົນສັກສິດໃຊ້ຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ທີ່.....ວັນທີ...../.....2025

ເຊັນຜູ້ຖືຮຸ້ນທີ່ມອບໝາຍ **ເຊັນຜູ້ຕາງໜ້າ**

ແຜນທີ່ ບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳບໍລິການ ແລະ ການຄ້າ ຂາອອກ-ຂາເຂົ້າ





ໝາຍເຫດ:

ເອກະສານທັງໝົດນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ